ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ນະຄອນຫຼວງວຽງຈັນ

ເລກທີ 847 /ຈນວ

ລົງວັນທີ 21. 8. 2023

# ຂໍ້ຕົກລົງ

## ວ່າດ້ວຍ ການສ້າງນະຄອນຫຼວງວຽງຈັນ ສະອາດ (ສ. ສະອາດ)

- ອີງຕາມ ມາດຕາ 19 ແລະ 20 ໃນໝວດທີ IV ຂອງ ກົດໝາຍ ວ່າດ້ວຍການປົກຄອງທ້ອງຖິ່ນແຫ່ງ ສປປ ລາວ ສະບັບເລກທີ 68/ສພຊ, ລົງວັນທີ 14 ທັນວາ 2015, ວ່າດ້ວຍ ພາລະບົດບາດ, ສິດ ແລະ ໜ້າທີ່ຂອງເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ.
- ອີງຕາມ ມາດຕາ 35 ໃນໝວດທີ V ຂອງ ກົດໝາຍ ວ່າດ້ວຍຜັງເມືອງ ສະບັບເລກທີ 40/ສພຊ, ລົງວັນທີ 16 ພະຈິກ 2017, ມາດຕາ 21, 22 ໃນໝວດທີ IV ຂອງ ກົດໝາຍ ວ່າດ້ວຍ ທາງຫຼວງ ສະບັບເລກທີ 03/ສພຊ, ລົງວັນທີ 18 ພະຈິກ 2016 ແລະ ພາກທີ I ມາດຕາ 3 ແລະ ມາດຕາ 46 ຂອງ ກົດໝາຍ ວ່າດ້ວຍການປົກປັກຮັກສາສິ່ງແວດລ້ອມ ສະບັບເລກທີ 29/ສພຊ, ລົງວັນທີ 18 ທັນວາ 2012.
- ອີງຕາມ ມະຕິ ກອງປະຊຸມສະໄໝສາມັນ ເທື່ອທີ 4 ຂອງສະພາປະຊາຊົນ ນະຄອນຫຼວງວຽງຈັນ, ວ່າດ້ວຍການຮັບ ຮອງເອົາ ຂໍ້ຕົກລົງ ການສ້າງນະຄອນຫຼວງວຽງຈັນ ສະອາດ (ສ ສະອາດ);
- ອີງຕາມ ໜັງສືສະເໜີຂອງຫ້ອງການຄຸ້ມຄອງ ແລະ ບໍລິການຕົວເມືອງວຽງຈັນ ສະບັບເລກທີ 0943/ຄບຕ.ນວ, ລົງວັນທີ 05 ເມສາ 2023.

## ເຈົ້າຄອງນະຄອນຫຼວງວຽງຈັນຕົກລົງ:

## ໝວດທີ 1

## ບົດບັນຍັດທົ່ວໄປ

ມາດຕາ 1 ຈຸດປະສົງ

ຂໍ້ຕົກລົງສະບັບນີ້ ກຳນົດຫຼັກການ, ນະໂຍບາຍ, ຕົວຊີ້ວັດ ແລະ ມາດຕະການ ກ່ຽວກັບ ການຄຸ້ມຄອງ, ການຈັດຕັ້ງປະຕິບັດການສ້າງນະຄອນຫຼວງວຽງຈັນສະອາດ (ສ. ສະອາດ) ເພື່ອປະກອບສ່ວນເຂົ້າໃນພາລະກິດສ້າງຕົວເມືອງທີ່ໜ້າຢູ່, ຍືນຍົງ, ອັດສະຣິຍະ ແລະ ສົມເປັນນະຄອນຫຼວງຂອງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ.

## ມາດຕາ 2 ນິຍາມ

ການສ້າງນະຄອນຫຼວງວຽງຈັນສະອາດ (ສ. ສະອາດ) ແມ່ນການເຮັດໃຫ້ຕົວເມືອງມີສະພາບແວດລ້ອມທີ່ດີ ບັນລຸ 8 ຕົວຊີ້ວັດສະອາດ (ເສັ້ນທາງສະອາດ, ເຄຫາສະຖານສະອາດ, ພາຫະນະສະອາດ, ສາທາລະນຸປະໂຫຍດສະອາດ, ໂຮງຈັກ-ໂຮງງານສະອາດ, ການບໍລິໂພກສະອາດ, ນ້ຳສະອາດ, ທ້ອງຟ້າສົດໃສ) ທີ່ໄດ້ກຳນົດໄວ້ໃນມາດຕາ 7 ຂອງຂໍ້ຕົກລົງສະບັບນີ້.

## ມາດຕາ 3 ອະທິບາຍຄຳສັບ

ຄຳສັບ ທີ່ໃຊ້ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. ສະພາບແວດລ້ອມທີ່ດີ: ໝາຍເຖິງ ຕົວເມືອງສີຂຽວ, ປັດສະຈາກມົນລະພິດ ເຊັ່ນ: ບໍ່ມີອາຍຄວັນຈາກການຈູດຂີ້ເຫຍື້ອ, ຈາກຄວັນພາຫະນະ, ກິ່ນເໝັນຈາກການປ່ອຍນ້ຳເສຍ, ຂີ້ເຫຍື້ອ ແລະ ສິ່ງເສດເຫຼືອຕາມຖະໜົນຫົນທາງ;

2. ກາຍຍະພາບຕົວເມືອງ: ໝາຍເຖິງຕົວເມືອງທີ່ມີໂຄງລ່າງສາທາລະນຸປະໂຫຍດເຊັ່ນ: ນ້ຳປະປາ, ໄຟຟ້າ, ເສັ້ນທາງ, ປ້ອງກັນຕາຝັ່ງເຈື່ອນ, ໂຮງຮຽນ, ໂຮງໝໍ, ສຳນັກງານ-ອົງການ, ສວນສາທາລະນະ, ລະບົບລະບາຍນ້ຳ, ສະຖານທີ່ອອກກຳລັງກາຍມີບ່ອນບຳບັດນ້ຳເປື້ອນນ້ຳເສຍ, ບ່ອນກຳຈັດຂີ້ເຫຍື້ອ...

3. ຕົວເມືອງອັດສະຣິຍະ: ໝາຍເຖິງຕົວເມືອງທີ່ມີ ການຍົກລະດັບສະມັດຕະພາບຂອງງານ ແລະ ປະສິດ ທິຜົນ ການນຳໃຊ້ຊັບພະຍາກອນ, ການປັບປຸງທາງດ້ານການບໍລິຫານ ໃຫ້ທັນກັບການປ່ຽນແປງໃໝ່ ໂດຍນຳໃຊ້ລະບົບໄອຊີທີ ເຂົ້າໃນການບໍລິຫານສຳນັກງານຫ້ອງການ, ເຂົ້າໃນລະບົບຄົມມະນາຄົມ, ການສື່ສານ...

4. ຕົວເມືອງໜ້າຢູ່: ໝາຍເຖິງ ຕົວເມືອງທີ່ບັນລຸຕົວຊີ້ວັດ 6 ສ: (ມີຄວາມສະຫງົບ, ສະອາດ, ສີຂຽວ, ສະຫວ່າງ, ສະໜ່, ສີວິໄລ) ແລະ ມີຄວາມຍືນຍົງ, ຫຼຸດພົ້ນອອກຈາກສະຖານະພາບດ້ອຍພັດທະນາ;

5. ການຫັນເປັນຕົວເມືອງ: ໝາຍເຖິງ ຂະບວນວິວັດແຫ່ງການປັບປຸງປ່ຽນແປງກາຍຍະພາບ ແລະ ຄຸນນະພາບ ລວມທັງການປັບປຸງວິຖີຊີວິດຂອງຊຸມຊົນ ແບບເດີມ ຫັນສູ່ຮູບແບບອຸດສາຫະກຳ ແລະ ບໍລິການທັນສະໄໝ ເຮັດໃຫ້ຄຸນນະພາບຕົວເມືອງມີອັນປ່ຽນແປງດີກວ່າເກົ່າ;

6. ເສັ້ນທາງສະອາດ: ໝາຍເຖິງ ລະບົບເສັ້ນທາງທີ່ຢູ່ໃນສະຖານະພາບປົກກະຕິດີ (ໜ້າທາງບໍ່ເປັນຂຸມ) ບໍ່ມີຂີ້ຝຸ່ນ, ຂີ້ຕົມ, ຂີ້ເຫຍື້ອ, ນ້ຳເປື້ອນ ແລະ ນ້ຳອັ່ງຂັງ ຕາມເສັ້ນທາງ ແລະ ຂອບທາງມີຄວາມສະອາດ;

- ຂີ້ເຫຍື້ອຖິ້ມຊະຊາຍບໍ່ມີຄົນຮັບຜິດຊອບ (ຂີ້ເຫຍື້ອອານາຖາ) ແມ່ນຂີ້ເຫຍື້ອຈາກບຸກຄົນນຳມາແຕ່ເຮືອນ ຫຼື ບ່ອນອື່ນໆ ມາຖິ້ມໄວ້ແຄມຖະໜົນຫົນທາງ, ແຄມຕະຄອງຮ່ອງນ້ຳ, ສວນສາທາລະນະ, ດິນເປົ່າຫວ່າງ...

7. ເຄຫາສະຖານສະອາດ: ໝາຍເຖິງ ຕຶກ, ອາຄານສຳນັກງານ-ອົງການ, ເຮືອນ, ກຳແພງ ຢູ່ໃນສະພາບດີ (ບໍ່ຊຸດໂຊມ, ທາສີໃໝ່ຢູ່ຕະຫລອດ) ບໍ່ມີສິ່ງກໍ່ສ້າງຕໍ່ເຕີມ, ມີບ່ອນເກັບມ້ຽນຂີ້ເຫຍື້ອສະເພາະ, ບໍ່ມີຂີ້ຝຸ່ນ, ນ້ຳເສຍ ນ້ຳເປື້ອນ, ກິ່ນເໝັນຢູ່ພາຍໃນເຄຫາສະຖານຂອງຕົນ;

8. ພາຫະນະສະອາດ: ໝາຍເຖິງ ພາຫະນະທຸກປະເພດ ທີ່ນຳໃຊ້ໃນຖະໜົນຕ້ອງມີມາດຕະຖານເຕັກນິກຄົບຖ້ວນ, ບໍ່ໃຫ້ມີການດັດແປງເຕັກນິກ, ບໍ່ສົ່ງຄວັນດຳອາຍພິດ ແລະ ສິ່ງສຽງດັງເກີນມາດຕະຖານທີ່ກຳນົດ, ຕົນລົດທຸກປະເພດຕ້ອງລ້າງສະອາດ, ລົດບັນທຸກສິນຄ້າ ແລະ ວັດສະດຸກໍ່ສ້າງຕ່າງໆ ຕ້ອງຫຸ້ມຫໍ່ໃຫ້ດີ, ບໍ່ມີສິ່ງເສດເຫຼືອຕົກໃສ່ຖະໜົນ;

9. ສາທາລະນຸປະໂຫຍດສະອາດ: ໝາຍເຖິງສວນສາທາລະນະ, ສະຖານີຈອດລົດ, ທ່າເຮືອ, ສະໜາມບິນ, ຕະຫຼາດ, ສູນການຄ້າ, ຮ້ານສັບພະສິນຄ້າ, ຮ້ານອາຫານ, ໂຮງຮຽນ, ໂຮງໝໍ, ສະໂມສອນອະເນກປະສົງ, ໂຮງລະຄອນ, ຫໍວັດທະນະທຳ, ຫໍສະໝຸດ, ສະໜາມກິລາ... ມີສະພາບແວດລ້ອມທີ່ດີ ເປັນລະບຽບຮຽບຮ້ອຍ, ບໍ່ເປິເປື້ອນບໍ່ສົ່ງກິ່ນເໝັນ ແລະ ມີບ່ອນຈອດລົດທີ່ພຽງພໍ;

10. ໂຮງຈັກ, ໂຮງງານ ສະອາດ: ໝາຍເຖິງ ໂຮງຈັກ, ໂຮງງານ ບໍ່ສົ່ງມົນລະພິດ, ບໍ່ມີສານເຄມີຕົກຄ້າງ, ບໍ່ສົ່ງຄວັນເກີນມາດຕະຖານ, ກິ່ນເໝັນ, ສຽງດັງເກີນກຳນົດ, ມີລະບົບບຳບັດນ້ຳເປື້ອນ ກ່ອນປ່ອຍລົງສູ່ຮ່ອງນ້ຳທຳມະຊາດ, ເສັ້ນທາງເຂົ້າ-ອອກ ໂຮງຈັກ, ໂຮງງານ ເປັນລະບຽບ ມີຄວາມສະອາດ;

11. ການບໍລິໂພກສະອາດ: ໝາຍເຖິງ ການກິນອາຫານຖືກຫຼັກສຸຂະອະນາໄມ (ກິນອາຫານທີ່ສຸກພືດຜັກສົດ, ໝາກໄມ້ສົດ, ຊີ້ນ ແລະ ປາ ທີ່ບໍ່ມີເຊື້ອພະຍາດ ແລະ ສານພິດຕົກຄ້າງ);

12. ນ້ຳສະອາດ: ໝາຍເຖິງ ສາຍນ້ຳ, ແມ່ນ້ຳ, ແຄມນ້ຳງື່ມ, ນ້ຳຂອງ, ຫວ້ຍຮ່ອງໜອງນ້ຳ ທຸກແຫ່ງບໍ່ມີກິ່ນເໝັນ, ບໍ່ເປັນບ່ອນເພາະເຊື້ອພະຍາດ, ບໍ່ມີຂີ້ເຫຍື້ອ, ບໍ່ມີເຄມີເຈືອປົນ ແລະ ສາມາດຊົມໃຊ້ໄດ້, ນ້ຳດື່ມທຸກປະເພດທີ່ຈຳໜ່າຍ ຕ້ອງຮັບປະກັນຄຸນນະພາບ ແລະ ບັນລຸມາດຕະຖານ, ຕ້ອງຜ່ານຂະບວນການຕົ້ມ, ກັ່ນຕອງ ແລະ ຂ້າເຊື້ອຢ່າງຖືກຕ້ອງຕາມຫຼັກອະນາໄມ;

13. ທ້ອງຟ້າສົດໃສ: ໝາຍເຖິງ ທ້ອງຟ້າຂອງນະຄອນຫຼວງສົດໃສ, ບໍ່ມີຝຸ່ນລະອອງ, ບໍ່ມີຄວັນລົດ, ສານພິດ, ຄວັນລະເຫີຍປົນເປື້ອນໃນອາກາດ, ຄວັນຈາກການຈູດເຜົາປົກຄຸມທ້ອງຟ້າ ເກີນມາດຕະຖານ.

### ມາດຕາ 4 ນະໂຍບາຍກ່ຽວກັບການສ້າງນະຄອນຫຼວງວຽງຈັນສະອາດ

1. ລັດຊຸກຍູ້ ແລະ ສົ່ງເສີມໃຫ້ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດປະກອບສ່ວນດ້ານທຶນຮອນ, ເຕັກນິກ, ພູມປັນຍາ, ເຫື່ອແຮງ ແລະ ປູກຈິດສຳນຶກ ເຂົ້າໃນການສ້າງນະຄອນຫຼວງວຽງຈັນສະອາດ, ຊຶ່ງເລີ່ມຈາກການສ້າງຄອບຄົວ, ຊຸມຊົນ, ບ້ານ ແລະ ກ້າວເຖິງການສ້າງຕົວເມືອງສະອາດ;

2. ລັດສະໜອງງົບປະມານ, ບຸກຄະລາກອນ, ວັດຖຸອຸປະກອນ ເຂົ້າໃນວຽກງານສ້າງນະຄອນຫຼວງວຽງຈັນສະອາດ ຕາມເງື່ອນໄຂ ແລະ ຄວາມສາມາດຕົວຈິງໃນແຕ່ລະໄລຍະ;

3. ການສ້າງນະຄອນຫຼວງວຽງຈັນສະອາດ ແມ່ນພັນທະໜ້າທີ່ຂອງພົນລະເມືອງລາວ, ຊາວຕ່າງດ້າວ, ຄົນບໍ່ມີສັນຊາດ ແລະ ຊາວຕ່າງປະເທດ ທີ່ເຄື່ອນໄຫວ ແລະ ດຳລົງຊີວິດຢູ່ນະຄອນຫຼວງວຽງຈັນ.

### ມາດຕາ 5 ຫຼັກການຂອງການສ້າງນະຄອນຫຼວງວຽງຈັນສະອາດ

1. ສ້າງຄວາມເປັນເອກະພາບຂອງປະຊາຊົນຊາວນະຄອນຫຼວງວຽງຈັນ ແລະ ຄວາມຮັບຜິດຊອບຮ່ວມກັນເພື່ອບັນລຸມາດຕະຖານ ແລະ 8 ຕົວຊີ້ວັດຂອງຄວາມສະອາດ ຕາມມາດຕາ 7;

2. ສ້າງສະຕິ ແລະ ຄວາມຕື່ນຕົວສະໝັກໃຈ ການມີສ່ວນຮ່ວມຂອງ ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ, ຊາວຕ່າງດ້າວ, ຄົນບໍ່ມີສັນຊາດ ແລະ ຊາວຕ່າງປະເທດ ທີ່ດຳລົງຊີວິດຢູ່ນະຄອນຫຼວງວຽງຈັນໃຫ້ປະຕິບັດຕາມລະບຽບກົດໝາຍ;

3. ພົນລະເມືອງທຸກຄົນ ມີຄວາມຮັບຜິດຊອບຕໍ່ການເຄື່ອນໄຫວກິດຈະກຳ ແລະ ການດຳລົງຊີວິດປົກກະຕິຂອງຕົນ, ບໍ່ສ້າງຄວາມຫຍຸ້ງຍາກໃຫ້ແກ່ວຽກງານການຮັກສາຄວາມສະອາດຂອງຕົວເມືອງ;

4. ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ, ຊາວຕ່າງດ້າວ, ຄົນບໍ່ມີສັນຊາດ ແລະ ຊາວຕ່າງປະເທດ ຕ້ອງມີພັນທະປະກອບສ່ວນລາຍຈ່າຍຂອງຄອບຄົວ, ຊຸມຊົນ, ບ້ານ ແລະ ສຳນັກງານອົງການ ເພື່ອຄວາມສະອາດຂອງນະຄອນຫຼວງວຽງຈັນ.

### ມາດຕາ 6 ຂອບເຂດການນຳໃຊ້

ຂໍ້ຕົກລົງສະບັບນີ້ ນຳໃຊ້ຕໍ່ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ, ຊາວຕ່າງດ້າວ, ຄົນບໍ່ມີສັນຊາດ ແລະ ຊາວຕ່າງປະເທດ ທີ່ເຄື່ອນໄຫວ ແລະ ດຳລົງຊີວິດ ຢູ່ໃນຂອບເຂດນະຄອນຫຼວງວຽງຈັນ.

## ໝວດທີ 2

## ເປົ້າໝາຍ, ຕົວຊີ້ວັດ, ແຜນວຽກ, ກົນໄກ ແລະ ວິທີການຈັດຕັ້ງປະຕິບັດ ການສ້າງນະຄອນຫຼວງວຽງຈັນສະອາດ

ມາດຕາ 7 ເປົ້າໝາຍ ແລະ ຕົວຊີ້ວັດການສ້າງນະຄອນຫຼວງວຽງຈັນສະອາດ

ເປົ້າໝາຍ ຂອງການສ້າງນະຄອນຫຼວງວຽງຈັນສະອາດ ແມ່ນການສ້າງບັນດາໂຄງລ່າງພື້ນຖານ ທີ່ຢູ່ໃນຂອບເຂດເທດສະບານ ແລະ ເຂດຊານເມືອງ ຂອງນະຄອນຫຼວງວຽງຈັນ ເພື່ອໃຫ້ເປັນພື້ນທີ່ສະອາດສວຍງາມເປັນລະບຽບຮຽບຮ້ອຍ ແລະ ຍືນຍົງ ຕາມ 8 ເປົ້າໝາຍດັ່ງນີ້:

1. ເສັ້ນທາງ ສະອາດ ປະກອບດ້ວຍຕົວຊີ້ວັດຄື:

- ບໍ່ໃຫ້ມີຂີ້ຝຸ່ນ, ບໍ່ມີຂີ້ເຫຍື້ອ ແລະ ນ້ຳເປື້ອນ ຕາມເສັ້ນທາງ ແລະ ຂອບທາງ;
- ໜ້າເສັ້ນທາງ, ແຄມທາງ ຢູ່ໃນສະຖານະພາບປົກກະຕິດີ (ໜ້າທາງບໍ່ເປັນຂຸມ);
- ຂອບເຂດທາງພາຍໃນຕົວເມືອງ ເປັນຕົ້ນ: ເສັ້ນທາງຫຼວງແຫ່ງຊາດ, ເສັ້ນທາງນະຄອນຫຼວງ, ເສັ້ນທາງຮ່ອມ, ທາງຄົນຍ່າງ ບໍ່ມີສິ່ງກີດຂວາງ ແລະ ຕ້ອງປັບປຸງໃຫ້ໄດ້ມາດຕະຖານ.

2. ເຄຫາສະຖານ ສະອາດ ປະກອບດ້ວຍຕົວຊີ້ວັດຄື:

- ຕຶກ, ອາຄານ, ສໍານັກງານ, ຫ້ອງການ, ເຮືອນ, ກໍາແພງ ຢູ່ໃນສະພາບດີ (ບໍ່ຊຸດໂຊມ), "ທາສີໃຫ້ໃໝ່ຢູ່ຕະຫຼອດ", ບໍ່ມີສິ່ງກໍ່ສ້າງຕໍ່ເຕີມທີ່ຜິດຕໍ່ລະບຽບກົດໝາຍ, ປຸກຖືກຕາມລະບຽບຜັງເມືອງທີ່ທາງການເປັນຜູ້ອະນຸມັດ;
- ບໍ່ມີຂີ້ຝຸ່ນ, ນ້ຳເສຍ, ນ້ຳເປື້ອນ, ກິ່ນເໝັນເກີນມາດຕະຖານທີ່ກໍານົດໄວ້ ແລະ ມີບ່ອນເກັບມ້ຽນຂີ້ເຫຍື້ອສະເພາະ ຢູ່ພາຍໃນຂອບເຂດເຄຫາສະຖານຂອງຕົນ;
- ບໍ່ວາງວັດສະດຸກໍ່ສ້າງໃນຂອບເຂດສະຖານທີ່ສາທາລະນະ ແລະ ບໍລິເວນການກໍ່ສ້າງຕ້ອງມີສິ່ງກັ້ນບັງຄວາມປອດໄພ;
- ເຮືອນ, ຕຶກ ອາຄານ ແລະ ກໍາແພງທີ່ຮ້າງ ຫຼື ຢຸດໂຈະການກໍ່ສ້າງຕ້ອງມີສິ່ງກັ້ນບັງທີ່ສວຍງາມ ແລະ ປອດໄພ.

3. ພາຫະນະ ສະອາດ ປະກອບດ້ວຍຕົວຊີ້ວັດຄື:

- ພາຫະນະທຸກປະເພດ ທີ່ນໍາໃຊ້ຕາມທ້ອງຖະໜົນຖືກຕ້ອງຕາມມາດຖານເຕັກນິກ, ບໍ່ມີການດັດແປງເຕັກນິກ;
- ພາຫະນະທຸກປະເພດທີ່ນໍາໃຊ້ຢູ່ໃນຕົວເມືອງ ບໍ່ໃຫ້ມີຄວັນດໍາ-ຂາວ, ບໍ່ປ່ອຍອາຍພິດ ແລະ ບໍ່ມີສຽງດັງເກີນມາດຕະຖານທີ່ກໍານົດ;
- ຕົນລົດທຸກປະເພດຕ້ອງລ້າງສະອາດ, ຕົນລົດເປື້ອນບໍ່ອະນຸຍາດໃຫ້ແລ່ນເຂົ້າໃນເຂດເທດສະບານ, ລົດບັນທຸກສິນຄ້າ ແລະ ວັດສະດຸກໍ່ສ້າງຕ່າງໆ ລວມທັງລົດບັນທຸກຫີນ-ຊາຍ ຕ້ອງຫຸ້ມຫໍ່ໃຫ້ດີ, ບໍ່ໃຫ້ມີສິ່ງເສດເຫຼືອຕົກເຮ່ຍໃສ່ເສັ້ນທາງ.

4. ສາທາລະນຸປະໂຫຍດ ສະອາດ ປະກອບດ້ວຍຕົວຊີ້ວັດຄື:

- ສວນສາທາລະນະທຸກແຫ່ງໃນນະຄອນຫຼວງວຽງຈັນ ຕ້ອງມີການປົວລະບັດຮັກສາ, ຕັດແຕ່ງ ແລະ ຂຽວງາມຕະຫຼອດເວລາ;

- ສະຖານີຈອດລົດ, ທ່າເຮືອ, ສະໜາມບິນ ທຸກໆແຫ່ງບໍ່ເປິເປື້ອນ, ເປັນລະບຽບຮຽບຮ້ອຍ;

- ຕະຫຼາດ, ສູນການຄ້າ, ຮ້ານສັບພະສິນຄ້າ, ຮ້ານອາຫານໃນຕົວເມືອງ ບໍ່ສົ່ງຜົນກະທົບທາງລົບຕໍ່ສິ່ງແວດລ້ອມ (ບໍ່ມີຂີ້ເຫຍື້ອຊະຊາຍ, ບໍ່ປ່ອຍນ້ຳເປື້ອນລົງສູ່ຮ່ອງລະບາຍນ້ຳສາທາລະນະໂດຍກົງ, ບໍ່ສົ່ງກິ່ນເໝັນ ແລະ ມີບ່ອນຈອດລົດພຽງພໍ);

- ໂຮງຮຽນ, ໂຮງໝໍ, ສະໂມສອນອະເນກປະສົງ, ໂຮງລະຄອນ, ຫໍວັດທະນະທຳ, ຫໍສະໝຸດ, ສະໜາມກິລາ, ຄ້າຍຄຸມຂັງດັດສ້າງ, ສະຖານທີ່ຊາປະນະກິດສົບ... ມີສະພາບແວດລ້ອມດີ (ບໍ່ມີຂີ້ເຫຍື້ອ, ບໍ່ມີຂີ້ຝຸ່ນ, ບໍ່ມີນ້ຳເປື້ອນ ແລະ ບໍ່ສົ່ງກິ່ນເໝັນ);

- ເຂດທ່ອງທ່ຽວ ຕ້ອງມີຖັງຂີ້ເຫຍື້ອຕັ້ງໃສ່ບ່ອນທີ່ເໝາະສົມ ແລະ ພຽງພໍ;

- ແຕ່ລະເມືອງທີ່ມີເງື່ອນໄຂ ຕ້ອງໃຫ້ມີສະໜາມກຳຈັດຂີ້ເຫຍື້ອທີ່ໄດ້ມາດຕະຖານ;

- ແຕ່ລະໜ່ວຍພາຍໃນບ້ານ ຕ້ອງໃຫ້ມີສະຖານທີ່ຈຸດພັກຂີ້ເຫຍື້ອລວມ ຕາມຄວາມເໝາະສົມ;

- ບັນດາຄອບຄົວ, ບ້ານພັກ, ໂຮງແຮມ, ຮ້ານອາຫານ, ສຳນັກງານ-ອົງການ, ຫ້າງຮ້ານ, ຕະຫຼາດ, ໂຮງຮຽນ ແລະ ອື່ນໆ ຕ້ອງໄດ້ມີການຄັດແຍກຂີ້ເຫຍື້ອແຕ່ຕົ້ນທາງ.

5. ໂຮງຈັກ, ໂຮງງານ ສະອາດ ປະກອບດ້ວຍຕົວຊີ້ວັດຄື:

- ໂຮງຈັກ, ໂຮງງານ, ໂຮງຊ່ຽນ, ຮ້ານຊື້-ຂາຍເຫຼັກເສດ, ຟາມລ້ຽງສັດ ບໍ່ສົ່ງມົນລະພິດ, ບໍ່ມີສານເຄມີຕົກຄ້າງ, ບໍ່ສົ່ງຄວັນ, ບໍ່ມີກິ່ນເໝັນ, ບໍ່ມີສຽງດັງເກີນລະບຽບກົດໝາຍກຳນົດ ສົ່ງອອກນອກເຂດຂອງຕົນ;

- ມີລະບົບບຳບັດນ້ຳເສຍ, ນ້ຳເປື້ອນ ກ່ອນປ່ອຍລົງສູ່ຮ່ອງລະບາຍນ້ຳທຳມະຊາດ;

- ເສັ້ນທາງເຂົ້າ-ອອກ ໂຮງຈັກ, ໂຮງງານ ມີຄວາມສະອາດ.

6. ການບໍລິໂພກ ສະອາດ ປະກອບດ້ວຍຕົວຊີ້ວັດຄື:

- ພົນລະເມືອງກິນອາຫານຖືກຫຼັກສຸຂະອະນາໄມ (ກິນອາຫານທີ່ສຸກ, ພືດຜັກສົດ, ໝາກໄມ້ສົດ, ຊີ້ນ ແລະ ປາທີ່ບໍ່ມີເຊື້ອພະຍາດ ແລະ ສານພິດຕົກຄ້າງ));

- ຜູ້ປູກຝັງນຳໃຊ້ຝຸ່ນຊີວະພາບ ແລະ ຝຸ່ນເຄມີເຂົ້າໃນການປູກພືດຜັກ ແລະ ຕົ້ນໄມ້ໃຫ້ໝາກ ແມ່ນຕ້ອງໃຫ້ຖືກຫຼັກວິຊາການ ຂອງພາກສ່ວນທີ່ກ່ຽວຂ້ອງ;

- ຮ້ານອາຫານ, ການປຸງແຕ່ງ ແລະ ການບໍລິການ ຖືກຕ້ອງຕາມຫຼັກອະນາໄມ, ສະອາດ, ປອດໄພ ແລະ ນຳໃຊ້ວັດຖຸດິບຈາກໂຮງງານ ຫຼື ແຫຼ່ງຈຳໜ່າຍທີ່ໄດ້ມາດຕະຖານ;

- ບ່ອນຈຳໜ່າຍຜົນຜະລິດກະສິກຳ, ສະບຽງອາຫານ ຕ້ອງຮັກສາໃຫ້ມີຄວາມສະອາດ.

7. ນ້ຳ ສະອາດ ປະກອບດ້ວຍຕົວຊີ້ວັດຄື:

- ຮ່ອງລະບາຍນ້ຳ, ໜອງນ້ຳທຸກໜອງ ບໍ່ມີກິ່ນເໝັນ ບໍ່ເປັນບ່ອນເພາະເຊື້ອພະຍາດ ແລະ ສັດນ້ຳສາມາດຢູ່ໄດ້;

- ແມ່ນ້ຳຂອງ, ນ້ຳງືມ, ຫ້ວຍ, ຮ່ອງ, ຄອງ, ບຶງບໍ່ມີຂີ້ເຫຍື້ອ, ບໍ່ມີເຄມີເຈືອປົນ ແລະ ສາມາດຊົມໃຊ້ໄດ້;

- ນ້ຳດື່ມທຸກປະເພດທີ່ຈຳໜ່າຍຕ້ອງຮັບປະກັນຄຸນນະພາບ ແລະ ບັນລຸມາດຕະຖານ, ຕ້ອງຜ່ານຂະບວນການກັ່ນຕອງ ແລະ ຂ້າເຊື້ອຢ່າງຖືກຕ້ອງຕາມຫຼັກອະນາໄມ.

8. ທ້ອງຟ້າສົດໃສ ປະກອບດ້ວຍຕົວຊີ້ວັດຄື:

- ທ້ອງຟ້າຂອງນະຄອນຫຼວງວຽງຈັນສົດໃສ, ບໍ່ມີຄວັນດຳ-ຄວັນຂາວ, ບໍ່ມີສານພິດ, ຄວັນລະເຫີຍປົນເປື້ອນໃນອາກາດເກີນມາດຕະຖານສິ່ງແວດລ້ອມແຫ່ງຊາດ, ບໍ່ມີຄວັນຈາກການຈູດເຜົາປົກຄຸມທ້ອງຟ້ານະຄອນຫຼວງວຽງຈັນ.

ມາດຕາ 8 ແຜນວຽກ ແລະ ກົນໄກການຈັດຕັ້ງປະຕິບັດ

1. ແຜນວຽກ ເສັ້ນທາງສະອາດ:

- ບູລິມະສິດທີ 1: ຈັດຕັ້ງປະຕິບັດ ເສັ້ນທາງສາຍຫຼັກໃນເຂດເທດສະບານ ໃຫ້ມີຄວາມສະອາດ ໃຫ້ບັນລຸຕາມມາດຖານຄວາມສະອາດ ແລະ ຕາມຕົວຊີ້ວັດ ບໍ່ໃຫ້ຫຼຸດ 90%;

- ບູລິມະສິດທີ 2 : ເຮັດໃຫ້ທຸກເສັ້ນທາງຫຼວງແຫ່ງຊາດ ໃນຂອບເຂດນະຄອນຫຼວງ ໃຫ້ມີຄວາມສະອາດຕາມມາດຖານ ແລະ ຕົວຊີ້ວັດໂດຍພື້ນຖານ ບໍ່ໃຫ້ຫຼຸດ 90%;

- ບູລິມະສິດທີ 3: ເຮັດໃຫ້ທຸກເສັ້ນທາງຮ່ອມ ໃນເທດສະບານ ຂອງນະຄອນຫຼວງວຽງຈັນ ຮັບປະກັນໃຫ້ມີຄວາມສະອາດ ບໍ່ໃຫ້ຫຼຸດ 85;

- ໜ້າທາງຕ້ອງມີຄວາມສະອາດ, ມີເສັ້ນແບ່ງເລນໃນການສັນຈອນ, ບໍ່ມີຮອຍແຕກແຫງບໍ່ເປັນບອກເປັນຂຸມ, ໜ້າທາງຕ້ອງລຽບດີ, ມີຄວາມເປັນໜ້າທາງຕາມມາດຕະຖານເຕັກນິກທີ່ໄດ້ກຳນົດໄວ້;

- ຂອບເຂດທາງແມ່ນພື້ນທີ່ທັງໝົດ ຂອງທາງຫຼວງຢູ່ໜ້າດິນ ຊຶ່ງບໍ່ອະນຸຍາດໃຫ້ມີການກໍ່ສ້າງ ຫຼື ທຸລະກິດຈະການໃດໜຶ່ງ, ທາງຫຼວງແຕ່ລະປະເພດແມ່ນໄດ້ກຳນົດຂອບເຂດຢ່າງລະອຽດຕາມກົດໝາຍວ່າດ້ວຍທາງຫຼວງ ສະບັບເລກທີ 3 /ສພຊ, ລົງວັນທີ 8 ພະຈິກ 2016 ຄື :

1. ທາງຫຼວງແຫ່ງຊາດ ມີຄວາມກວ້າງເບື້ອງລະ 25 ແມັດ ນັບແຕ່ໃຈກາງທາງອອກໄປ;
2. ທາງຫຼວງແຂວງ ມີຄວາມກ້ວາງເບື້ອງລະ 15 ແມັດ ນັບແຕ່ໃຈກາງທາງອອກໄປ;
3. ທາງຫຼວງເມືອງ ມີຄວາມກວ້າງ ເບື້ອງລະ 10 ແມັດ ນັບແຕ່ໃຈກາງທາງອອກໄປ;
4. ທາງຊົນນະບົດ ມີຄວາມກ້ວາງ ເບື້ອງລະ 5 ແມັດ ນັບແຕ່ໃຈກາງທາງອອກໄປ.

- ກົນໄກການຈັດຕັ້ງປະຕິບັດ:

- ປັດກວາດ ເສັ້ນທາງສາຍຫຼັກ ນໍາໃຊ້ແຮງງານຄົນ ແລະ ເຄື່ອງຈັກທີ່ທັນສະໄໝ, ດູດຝຸ່ນ, ລ້າງທາງດ້ວຍກົນຈັກ ແລະ ເກັບມ້ຽນຂີ້ເຫຍື້ອ ເປັນປົກກະຕິ;

- ລະດົມທົ່ວສັງຄົມ ເພື່ອປະກອບສ່ວນເຂົ້າໃນການຮັກສາຄວາມສະອາດເສັ້ນທາງໃຫ້ມີຄວາມສະອາດ;

- ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ, ຊາວຕ່າງດ້າວ, ຄົນບໍ່ມີສັນຊາດ ແລະ ຊາວຕ່າງປະເທດ ຕ້ອງເປັນເຈົ້າການປະຕິບັດພັນທະ ໃນການປະກອບສ່ວນເຮັດໃຫ້ອ້ອມຮອບເຮືອນຂອງຕົນເອງມີຄວາມສະອາດ;

- ວຽກທີ່ຈຳເປັນທີ່ຈະຕ້ອງໄດ້ປະຕິບັດໃນການປົກປັກຮັກສາຂອບເຂດທາງໃຫ້ມີຄວາມສະອາດຄື :

1. ປັກຫຼັກໝາຍເຂດສະຫງວນທາງ
2. ອະນາໄມທາງຄົນຍ່າງ, ບ່າທາງ ແລະ ເຂດສະຫງວນທາງ
3. ປົກປັກຮັກສາສິ່ງປະກອບຂອງທາງເຊັ່ນ : ປ້າຍ, ທໍ່ລະບາຍນໍ້າ, ເສົາໄຟເຍືອງທາງ ແລະ ອື່ນໆ ບໍ່ໃຫ້ຖືກທຳລາຍ.
4. ການມີສ່ວນຮ່ວມຂອງສັງຄົມ.

2. ແຜນວຽກ ເຄຫາສະຖານສະອາດ:

- ປັບປຸງລະບົບສາຍໄຟຟ້າ, ສາຍໂທລະຄົມ (ສາຍໂທລະສັບ, ສາຍເຄເບີ້ນ, ສາຍອິນເຕີເນັດ) ສາຍໂທລະພາບຄືນໃໝ່ ໃຫ້ໄດ້ມາດຕະຖານເປັນລະບຽບຮຽບຮ້ອຍຈົບງາມ ແລະ ມີຄວາມປອດໄພ;

- ທຸກໆເມືອງໃນເຂດເທດສະບານ ສ້າງໃຫ້ມີຕົວແບບເຄຫາສະຖານສະອາດ ຢ່າງໜ້ອຍໃຫ້ໄດ້ 3 ບ້ານ ແລະ 3 ກິດຈະການເຄຫາສະຖານສະອາດ;

- ກຳນົດຮູບຊົງດ້ານໜ້າຂອງຕຶກຄົນ ແລະ ອາຄານທີ່ຈະປຸກສ້າງໃນເສັ້ນທາງໃໝ່ໃຫ້ມີລັກສະນະຄ້າຍຄືກັນ;

- ໃນເຂດເມືອງໃໝ່ ທີ່ອະນຸຍາດປຸກສ້າງ ໃຫ້ບັນລຸຕົວຊີ້ວັດຕົວເມືອງໜ້າຢູ່ (6 ສ) ແລະ ທັນສະໄໝ, ເອົາສາຍໄຟຟ້າ, ສາຍໂທລະສັບ, ສາຍໂທລະພາບ ລົງພື້ນດິນ;

- ຈັດຕັ້ງນຳພາສ້ອມແປງຮົ້ວກຳແພງ, ມ້າງສິ່ງປຸກສ້າງ ທີ່ເກົ່າແກ່ ຊຸດໂຊມ;

- ຈັດຕັ້ງນຳພາບູລະນະ ແລະ ກໍ່ສ້າງພື້ນຖານໂຄງລ່າງ: (ລະບົບລະບາຍນ້ຳ, ທາງຮ່ອມ, ລະບົບໄຟຟ້າ, ລະບົບນ້ຳປະປາ, ສາຍໂທລະພາບ ແລະ ສາຍໂທລະສັບ) ທີ່ເຊື່ອມຕໍ່ແຕ່ເຮືອນຂອງຕົນຫາຄົວເຮືອນເພື່ອນບ້ານ ແລະ ເສັ້ນທາງ ໃຫ້ໄດ້ມາດຕະຖານ;

- ຈັດຕັ້ງນຳພາການຮື້ຖອນສິ່ງກໍ່ສ້າງທີ່ຕໍ່ເຕີມທີ່ຜິດກັບແຜນຜັງກຳນົດເປັນຕົ້ນ: ເທີບ, ເງີບ, ຕູບ ແລະ ປ້າຍໂຄສະນາທີ່ບໍ່ສອດຄ່ອງ ກັບລະບຽບຜັງເມືອງ ໃນ 21 ເສັ້ນທາງສາຍຫຼັກ ແລະ ທາງຫຼວງແຫ່ງຊາດ;

- ລະດົມທາສີສິ່ງປຸກສ້າງ (ເຮືອນ, ຕຶກ, ອາຄານ, ຮົ້ວ, ກຳແພງ) ໃນເຂດເທດສະບານທີ່ຕັ້ງລຽບຕາມທາງຫຼວງແຫ່ງຊາດ, 21 ເສັ້ນທາງສາຍຫຼັກ ແລະ ຫ້ອງການຂອງຕົນໃນຂອບເຂດ 4 ຕົວເມືອງໃຫ້ໃໝ່ຢູ່ຕະຫລອດ.

- **ກົນໄກການຈັດຕັ້ງປະຕິບັດ:**

- ແຕ່ລະຄົວເຮືອນ, ແຕ່ລະໜ່ວຍ 10 ຫຼັງຄາເຮືອນ ແລະ ບ້ານເປັນເຈົ້າຕົນເອງ, ແກ້ໄຂເອົາເອງ ເປັນສຳຄັນ ໂດຍແມ່ນພະນັກງານສັງກັດລັດ (ຂອງກະຊວງ-ອົງການ, ນະຄອນຫຼວງວຽງຈັນ ແລະ ເມືອງ) ປະຈຳຢູ່ບ້ານເປັນຕົວແບບ ແລະ ນາຍບ້ານນຳພາ;

- ຖືອົງການຈັດຕັ້ງ ແລະ ປະຊາຊົນທີ່ເປັນເພື່ອນບ້ານເປັນກຳລັງໜູນໃນຊຸມຊົນ (ບ້ານ ຫຼື ທົວໜ່ວຍ 10 ຫຼັງຄາເຮືອນ), ເປັນກຳລັງຊຸກດັນແກ້ໄຂຕໍ່ຜູ້ບໍ່ປະຕິບັດ;

- ນຳໃຊ້ມາດຕະການດ້ານບໍລິຫານ, ການປັບໃໝ ແລະ ມາດຕະການດ້ານກົດໝາຍເພື່ອແກ້ໄຂ.

- ສ້າງຕັ້ງໜ່ວຍງານກວດກາຜັງເມືອງ ນະຄອນຫຼວງວຽງຈັນ ແລະ ເສັ້ນທາງຫຼວງ ເປັນອັນດຽວກັນກັບຄວາມສະອາດ ໂດຍເຮັດໜ້າທີ່ປະເມີນຄວາມສະອາດຂອງເຄຫາສະຖານ 5 ປະເພດ (ໃນມາດຕາ 9 ຂໍ້ 7);

- ຄົ້ນຄວ້ານຳສະເໜີສ້າງຕັ້ງຕຳຫຼວດເທດສະບານ ເພື່ອກຳກັບການຈັດຕັ້ງປະຕິບັດກົດໝາຍຜັງເມືອງ;

- ຈັດສັນງົບປະມານ ຈາກງົບປະມານຂອງລັດ, ຈາກການປະກອບສ່ວນຂອງສັງຄົມ ແລະ ເຈົ້າຂອງເຮືອນ, ຕຶກ, ອາຄານ ສິ່ງປຸກສ້າງໃຫ້ພຽງພໍກັບການເຄື່ອນໄຫວຂອງເຈົ້າໜ້າທີ່ ໜ່ວຍງານກວດກາຄວາມສະອາດ.

3. ແຜນວຽກ ພາຫະນະ ສະອາດ

- ສ້າງຈຸດລ້າງຕົນລົດ ກ່ອນຈະເຂົ້າສູ່ຕົວເມືອງ 7 ຈຸດ ຄື: ເມືອງ ຫາດຊາຍຟອງ 2 ແຫ່ງ: ເຂດບ້ານບໍ່ໂອ ແລະ ເຂດບ້ານສາລາຄຳ; ເມືອງສີໂຄດຕະບອງ 2 ແຫ່ງ: ເຂດບ້ານໂນນຂີ້ເຫລັກ ແລະ ເຂດສາມແຍກໜອງບຶກ, ເມືອງໄຊເສດຖາ 1 ແຫ່ງ ເຂດບ້ານນາຄວາຍ, ເມືອງໄຊທານີ 2 ແຫ່ງ: ເຂດຫຼັກ 18 ແລະ ດົງໝາກຄາຍ, ລວມທັງ ຈຸດເຂົ້າ-ອອກ ສະຖານທີ່ກິດຈະການກໍ່ສ້າງຕ່າງໆ;

- ການບັນຈຸຂອງລົດບັນທຸກສິນຄ້າ ແລະ ວັດສະດຸກໍ່ສ້າງ, ລົດບັນທຸກດິນຫີນ-ຊາຍ, ລົດໂດຍສານ ທີ່ຈະເຂົ້າມາໃນຂອບເຂດເທດສະບານໃຫ້ຢູ່ໃນເກນທີ່ອະນຸມັດ;

- ລົດໂດຍສານທຸກປະເພດຕ້ອງມີກະຕ່າ ຫລື ຖົງໃສ່ຂີ້ເຫຍື້ອ;

- ສົ່ງເສີມການສ້າງຕັ້ງສູນກວດກາເຕັກນິກພາຫະນະສະເລ່ຍ ໃຫ້ໄດ້ເມືອງລະແຫ່ງ;

- ຄົ້ນຄວ້າແຜນນຳໃຊ້ນ້ຳມັນຊີວະພາບ (Biodiesel) ໃຫ້ກວ້າງຂວາງ, ນຳໃຊ້ລົດທີ່ແລ່ນດ້ວຍໄຟຟ້າ ແລະ ແອັດຊັງ ເພື່ອລົດຜ່ອນມົນລະພິດ;

- ສ້າງຕັ້ງໜ່ວຍງານກວດກາ ພາຫະນະທຸກປະເພດ ເປັນໜ່ວຍງານດຽວກັນກັບກວດກາຄວາມສະອາດ ເພື່ອ ປະເມີນໃຫ້ຄະແນນພາຫະນະສະອາດ;

- ກວດກາກິດຈະການອູ່ສ້ອມແປງ-ເຄາະພົ່ນສີລົດ, ການບໍລິການລ້າງອັດສີດລົດ ບໍ່ໃຫ້ລ້າງຂີ້ດິນ, ຂີ້ຕົມ, ສິ່ງເສດເຫຼືອ ລົງສູ່ຮ່ອງລະບາຍນໍ້າຢ່າງເດັດຂາດ ແລະ ບໍ່ໃຫ້ສົ່ງກິ່ນ, ສານເຄມີພົ່ນສີລົດ ຫຼື ສິ່ງຜົນກະທົບຕໍ່ອາກາດ.

- ກົນໄກການຈັດຕັ້ງປະຕິບັດ:

- ສຶກສາອົບຮົມຜູ້ຂັບຂີ່ ທີ່ລະເມີດລະບຽບການຂົນສົ່ງ ແລະ ສ້າງຄວາມເປິເປື້ອນ ໃສ່ເສັ້ນທາງ;
- ຫ້າມບໍ່ໃຫ້ພາຫະນະຂົນສົ່ງ ລົດບັນທຸກໜັກ (ລົດ 10 ລໍ້, ລົດພວງ) ແລ່ນຜ່ານເສັ້ນທາງທີ່ຫ້າມແລ່ນ ທີ່ໄດ້ກຳນົດໄວ້ແລ້ວ;
- ດຳເນີນການປັບໃໝຕໍ່ຜູ້ລະເມີດຂໍ້ຕົກລົງສະບັບນີ້ ຕາມດຳລັດສະບັບເລກທີ 568/ລບ, ລົງວັນທີ 16 ກັນຍາ 2021;
- ຄົ້ນຄວ້າສ້າງໃຫ້ມີລະບຽບການຄຸ້ມຄອງ ກິດຈະການອູ່ສ້ອມແປງ-ເຄາະພົ່ນສີລົດ, ການບໍລິການລ້າງອັດສີດ ແລະ ບ່ອນລ້າງຕີນລົດ ທີ່ຈະເຂົ້າສູ່ຕົວເມືອງ;
- ສົ່ງເສີມໃຫ້ເອກະຊົນຜູ້ທີ່ມີເງື່ອນໄຂລົງທຶນກໍ່ສ້າງບ່ອນລ້າງຕີນລົດຕາມຈຸດເຂົ້າຕົວເມືອງທີ່ຍັງເປັນດິນແດງແຕ່ລະເສັ້ນທາງເຂົ້າຫາຕົວເມືອງ;
- ຫຼຸດຜ່ອນການນຳເຂົ້າພາຫະນະມືສອງທຸກປະເພດ ແລະ ລົດເກົ່າທີ່ຂາດມາດຖານເຕັກນິກ.

4. ແຜນວຽກ ສາທາລະນຸປະໂຫຍດ ສະອາດ

- ບົວລະບັດຮັກສາ ແລະ ປັບປຸງ ສວນສາທາລະນະໃນຕົວເມືອງທີ່ມີແລ້ວ ໃຫ້ຄົງຢູ່ ແລະ ສາມາດບໍລິ ການຮັບໃຊ້ດີ;
- ຈັດສັນ ແລະ ປັບປຸງການບໍລິການບ່ອນຈອດລົດສາທາລະນະ(Parking)ທີ່ມີແລ້ວໃຫ້ເປັນລະບົບລະບຽບ;
- ກໍ່ສ້າງບ່ອນຈອດລົດໃຫຍ່ຂະໜາດຕ່າງໆໃນທຸກໆເມືອງ, ເທດສະບານຂອງເມືອງໜຶ່ງ ບໍ່ຫຼຸດ 5 ແຫ່ງ ແລະ ເຂດຊຸມຊົນໜາແໜ້ນໃຫ້ພຽງພໍ;
- ຟື້ນຟູປົວແປງ ໂຮງຮຽນ, ໂຮງໝໍ, ຄ້າຍຄຸມຂັງ, ສະຖານທີ່ຊາປະນະກິດສົບ, ສະໂມສອນຕາມແຄມທາງຫຼວງແຫ່ງຊາດ ແລະ ທາງຫຼວງຂອງນະຄອນຫຼວງວຽງຈັນ ໃຫ້ໄດ້ມາດຕະຖານສະອາດຢູ່ຕະຫຼອດ;
- ກໍ່ສ້າງ ແລະ ປັບປຸງສະຖານນີລົດເມ, ລົດໂດຍສານພາຍໃນ ສາຍເໜືອ, ສາຍໃຕ້ ແລະ ຕ່າງປະເທດ ໃຫ້ເຂົ້າສູ່ມາດຕະຖານ;
- ປູກຈິດສຳນຶກໃຫ້ນັກຮຽນ, ນັກສຶກສາ ແລະ ພໍ່ແມ່ປະຊາຊົນ ໃຫ້ມີສ່ວນຮ່ວມໃນການຮັກສາຄວາມສະອາດ;
- ປັບປຸງ, ປະຕິສັງຂອນຫໍພິພິດຕະພັນ ແລະ ປູສະນີຍະສະຖານ ຈຳນວນໜຶ່ງຄືນໃໝ່;
- ປັບປຸງຍົກລະດັບຕະຫຼາດໃນຕົວເມືອງໃຫ້ເປັນສູນການຄ້າ, ສືບຕໍ່ຍົກຍ້າຍ ແລະ ຈັດສັນຕະຫລາດທີ່ມີຄວາມສັບສົນແອອັດ ອອກໄປສູ່ຊານເມືອງ: ຕະຫຼາດຂົວດິນ (ໜອງຈັນ), ຕະຫຼາດຫົວຂົວທາດຫຼວງ, ຕະຫຼາດສວນມອນ, ທົ່ງຂັນຄຳ, ສີໄຄ ແລະ ອື່ນໆ...ໄປສ້າງຢູ່ຈຸດໃໝ່ທີ່ເໝາະສົມ;
- ສ້າງ ແລະ ປັບປຸງສວນສາທາລະນະ, ສະຖານທີ່ລົດໂດຍສານ, ຕະຫຼາດ, ສະໜາມຂີ່ເຫຍື່ອ ໃນເທດສະບານຂອງທຸກໆເມືອງ.

- ກົນໄກການຈັດຕັ້ງປະຕິບັດ:

- ຈັດຕັ້ງ ແລະ ບັນຈຸແຮງງານຄົນເຂົ້າໃນການບົວລະບັດຮັກສາສວນສາທາລະນະ ເປັນປະຈຳ;
- ກວດກາ ແລະ ໃຫ້ຄະແນນຕໍ່ກິດຈະການສາທາລະນຸປະໂຫຍດ ເປັນຕົ້ນສະຖານນີລົດໂດຍສານ ແລະ ສະຖານີຈອດລົດ (Parking) ທີ່ມີແລ້ວແຕ່ລະເດືອນ;
- ສ້າງ ແລະ ປະກາດໃຊ້ລະບຽບການຄຸ້ມຄອງ ແລະ ບໍລິການສວນສາທາລະນະ;

- ສົ່ງເສີມເອກະຊົນລົງທຶນ, ສ້າງບ່ອນຈອດລົດ (Parking);

- ລະດົມທຶນຈາກສັງຄົມ ເພື່ອມາຊ່ວຍສະໜັບສະໜູນ, ປັບປຸງ, ປະຕິສັງຂອນ ສາທາລະນຸປະໂຫຍດຂອງຕົວເມືອງ ແລະ ຈັດຕັ້ງລະດົມຊຸມຊົນມີສ່ວນຮ່ວມໃນການຄຸ້ມຄອງ, ຮັກສາ ແລະ ພັດທະນາກິດຈະການສາທາລະນຸປະໂຫຍດໃນເຂດໃກ້ຄຽງກັບຕົນຢູ່;

- ປະຕິບັດມາດຕະການໃຫ້ຄະແນນ, ກ່າວເຕືອນ, ປັບໃໝ ແລະ ລົງວິໄນຕໍ່ຜູ້ລະເມີດລະບຽບການຄຸ້ມຄອງສວນສາທາລະນະ ແລະ ບ່ອນຈອດລົດໃນຕົວເມືອງ.

5. ແຜນວຽກໂຮງຈັກ-ໂຮງງານ ສະອາດ:

- ຈັດສັນຄືນໃໝ່ ແລະ ຍົກຍ້າຍບັນດາອູ່ສ້ອມແປງ, ຮ້ານພົ່ນສີ, ຮ້ານຂາຍເຄື່ອງວັດສະດຸກໍ່ສ້າງ, ໂຮງງານປະສົມເບຕົງແຫຼວ, ໂຮງງານຜະລິດສິ່ງກໍ່ສ້າງ, ຮ້ານຊື້-ຂາຍເຫຼັກເສດ, ຟາມລ້ຽງສັດ ແລະ ອື່ນໆ... ທີ່ມີຜົນກະທົບຕໍ່ສິ່ງແວດລ້ອມອອກຫ່າງຈາກຊຸມຊົນ;

- ຈັດສັນຄືນໃໝ່ ແລະ ຫັນເຂົ້າສູ່ແຜນຜັງການຈັດສັນເຂດປະກອບການໃນຕົວເມືອງຕາມຍຸດທະສາດ, ເຊິ່ງກຳນົດອອກ ໃນແຜນຜັງລວມຕົວເມືອງນະຄອນຫຼວງວຽງຈັນ ຮອດປີ 2030 ເຂດໂຮງງານອຸດສາຫະກຳໜັກ, ອຸດສາຫະກຳເບົາ, ເຂດບໍລິການ...

- ເກັບກຳຂໍ້ມູນ ແລະ ກວດກາອູ່ສ້ອມແປງລົດ, ຮ້ານພົ່ນສີລົດ, ຮ້ານຂາຍເຄື່ອງວັດສະດຸກໍ່ສ້າງ, ຮ້ານຊື້ຂາຍເຫຼັກເສດ, ໂຮງງານປະສົມເບຕົງ ໃນເທດສະບານຕົວເມືອງໄປສູ່ຕະຫຼາດອຸປະກອນກໍ່ສ້າງ ແລະ ເຂດ ອື່ນໆ;

- ປັບປຸງ ແລະ ຊຸກຍູ້ການເຄື່ອນໄຫວຂອງອົງການມາດຕະຖານນະຄອນຫຼວງວຽງຈັນ (ພະແນກ ອຸດສາຫະກຳ ແລະ ການຄ້າ) ໃຫ້ເປັນເຄື່ອງມືກວດກາຄຸ້ມຄອງເປັນປະຈຳ;

- **ກົນໄກການຈັດຕັ້ງປະຕິບັດ:**

- ສຶກສາອົບຮົມ, ກ່າວເຕືອນຕໍ່ຜູ້ເປັນເຈົ້າຂອງກິດຈະການທີ່ສົ່ງຜົນກະທົບ ຕໍ່ສິ່ງແວດລ້ອມຕົວເມືອງ;

- ສົ່ງເສີມພາກເອກະຊົນ, ປະຊາຊົນ ແລະ ໃຊ້ກຳລັງແຮງປະຊາຊົນ, ສື່ມວນຊົນຢູ່ພາຍໃນພື້ນທີ່ເພື່ອກວດກາແກ້ໄຂ;

- ໃຊ້ມາດຕະການດ້ານບໍລິຫານເຊັ່ນ: ປັບໃໝຕໍ່ຜູ້ລະເມີດລະບຽບກົດໝາຍ;

- ໜ່ວຍງານຂອງລັດ ຕ້ອງເຄື່ອນໄຫວກວດກາຕໍ່ທຸກກິດຈະການ ທີ່ມີທ່າງສຽງວິພາກວິຈານຕໍ່ຜົນກະທົບ ແລະ ຕໍ່ສິ່ງແວດລ້ອມຕົວເມືອງ.

6. ແຜນວຽກ ການບໍລິໂພກສະອາດ:

- ແຜນວຽກສົ່ງເສີມປູກພືດຜັກ, ໝາກໄມ້ແບບທຳມະຊາດ, ປອດສານເຄມີ ແລະ ພືດຜັກສະອາດ (ຕາມມາດຖານສາກົນ); ແຜນວຽກສົ່ງເສີມການບໍລິໂພກອາຫານເພື່ອສຸຂະພາບ ແລະ ການຈະເລີນພັນ (ຕາມຕົວຊີ້ວັດຂອງສາກົນ);

- ສ້າງປຶ້ມຄູ່ມືການບໍລິໂພກສະອາດຂອງພາຍໃນ ແລະ ຕ່າງປະເທດ ແລະ ສ້າງປຶ້ມຄູ່ມືແນະນຳການການປຸງແຕ່ງອາຫານຂອງຄົວເຮືອນ, ຮ້ານອາຫານ ແລະ ໂຮງແຮມ;

- ກວດກາຄຸ້ມຄອງການນຳໃຊ້, ການຜະລິດຢາ ຢູ່ພາຍໃນ ແລະ ນຳເຂົ້າຈາກຕ່າງປະເທດ;

- ຍົກລະດັບໂຮງງານຂ້າສັດ ໃຫ້ກາຍເປັນແຫຼ່ງສະໜອງຊີ້ນສັດສະອາດ;

- ສ້າງ ແລະ ປັບປຸງຕະຫຼາດກະສິກຳ, ຕະຫຼາດຂາຍສົ່ງ-ຂາຍຍ່ອຍ ຕາມແຕ່ລະເມືອງ;

- ສົ່ງເສີມໂຄງການຜະລິດກະສິກຳ, ສະບຽງອາຫານສະອາດໃຫ້ເປັນສິນຄ້າທີ່ມີມາດຕະຖານຂອງແຕ່ລະເມືອງ, ສົ່ງເສີມການປຸງແຕ່ງ, ການຫຸ້ມຫໍ່, ຂະຫຍາຍການຈຳໜ່າຍສິນຄ້າກະສິກຳ: ຊີ້ນ, ປາ ຕາມສູນການຄ້າໃຫຍ່ໃນເທດສະບານຕົວເມືອງ ແລະ ສົ່ງເສີມສື່ມວນຊົນ ແນະນຳ ແລະ ຕຳນິວິຈານ ຕໍ່ສະພາບການບໍລິໂພກ;
- ສ້າງນິຕິກຳ ແລະ ເຄື່ອງມືໃນການກວດກາຜົນຜະລິດກະສິກຳປອດສານເຄມີ.

- ກົນໄກການຈັດຕັ້ງປະຕິບັດ:

- ຜູ້ຜະລິດ ແລະ ປຸງແຕ່ງສະບຽງອາຫານຕ້ອງສະເໜີໂຄງປະກອບຂອງແຫຼ່ງວັດຖຸດິບທັງໝົດ,ຖ້າບໍ່ສະເໜີຖືເປັນຄວາມຜິດ;
- ບຸກຄົນ, ນິຕິບຸກຄົນ, ຜູ້ປະກອບການ, ຜູ້ຜະລິດສະບຽງອາຫານຈາກ ໂຮງງານຂ້າສັດ, ຕະຫຼາດຈຳໜ່າຍສິນຄ້າ ຕ້ອງເປັນເຈົ້າການຮັບຜິດຊອບຄວບຄຸມ, ກວດກາຄຸນນະພາບ ແລະ ມາດຕະຖານ;
- ດຳເນີນການກວດກາໃຫ້ຄະແນນຄຸນນະພາບອາຫານ ແລະ ຢາສະອາດ ເປັນປະຈຳອາທິດ ແລະ ລາຍງານສັງຄົມ;
- ກ່າວເຕືອນ, ປັບໃໝ ແລະ ລົງວິໄນຕໍ່ຜູ້ລະເມີດ, ຍ້ອງຍໍສັນລະເສີນຜູ້ປະຕິບັດດີ ແລະ ຜູ້ໃຫ້ເບາະແສການລະເມີດ.

7. ແຜນວຽກ ນ້ຳສະອາດ:

- ອະນາໄມ ຮ່ອງລະບາຍນ້ຳໃນເທດສະບານ ແລະ ຊານເມືອງ;
- ກວດການ້ຳສະອາດເປັນປະຈຳ ໃຫ້ບັນລຸມາດຕະຖານ ຂອງກະຊວງສາທາລະນະສຸກ;
- ສ້າງອ່າງບຳບັດນ້ຳເປື້ອນກ່ອນໄຫຼລົງສູ່ຄອງ, ບຶງ-ນ້ຳຂອງ, ນ້ຳງື່ມ ແລະ ທຸກໆຄອງໃຫຍ່;
- ສ້າງອ່າງບຳບັດອາຈົມ ໃນນະຄອນຫຼວງວຽງຈັນ ໃຫ້ໄດ້ຢ່າງໜ້ອຍ 5 ແຫ່ງ;
- ສ້າງໃຫ້ມີໂຮງງານບຳບັດນ້ຳເປື້ອນໃນຕົວເມືອງ ເພື່ອຫຼຸດຜ່ອນຜົນກະທົບດ້ານສິ່ງແວດລ້ອມ;
- ກວດກາ ການນຳໃຊ້ຮ່ອງລະບາຍນ້ຳໃນຕົວເມືອງ ແລະ ຊານເມືອງ;
- ກວດກາ ການປ່ອຍນ້ຳເປື້ອນຄົວເຮືອນ, ບ້ານພັກ-ໂຮງແຮມ, ຮ້ານອາຫານ, ສະຖານທີ່ບໍລິການ, ໂຮງຈັກໂຮງງານ ແລະ ສະຖານທີ່ສາທາລະນະຕ່າງໆ ໃຫ້ບັນລຸມາດຕະຖານຂອງ ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ວາງອອກ;
- ກວດກາ ແລະ ຄຸ້ມຄອງ ນ້ຳງື່ມ ນ້ຳຂອງ ເຮັດໃຫ້ນ້ຳບໍ່ມີມົນລະພິດ ສາມາດອາບ ແລະ ຊົມໃຊ້ໄດ້;
- ສ້າງໃຫ້ມີນິຕິກຳໃນການຄຸ້ມຄອງ ແລະ ມາດຕະການຕໍ່ຜູ້ລະເມີດ ແລະ ລະບຽບການຄຸ້ມຄອງຮ່ອງລະບາຍນ້ຳໃນຕົວເມືອງ;
- ສ້າງແຜນຜັງແມ່ບົດລະບົບລະບາຍນ້ຳຕົວເມືອງ;
- ຄົ້ນຄວ້າແຫຼ່ງທຶນການກູ້ຢືມ ຫຼື ຊ່ວຍເຫຼືອລ້າ ແລະ ຊອກຫານັກລົງທຶນພາຍໃນ ແລະ ຕ່າງປະເທດ ຜູ້ທີ່ມີເງື່ອນໄຂມາລົງທຶນກໍ່ສ້າງຮ່ອງລະບາຍນ້ຳທີ່ເປັນຮ່ອງດິນທຳມະຊາດໃຫ້ໄດ້ມາດຕະຖານ.

- ກົນໄກການຈັດຕັ້ງປະຕິບັດ:

- ຈັດຕັ້ງໜ່ວຍງານລອກຮ່ອງລະບາຍນ້ຳສາຍແມ່, ຮ່ອງແຄມທາງທີ່ກໍ່ສ້າງໄດ້ມາດຕະຖານ, ຢ່າງໜ້ອຍ ປີລະຄັ້ງ ແລະ ຮ່ອງທຳມະຊາດ ກ່ອນລະດູຝົນ;
- ລະດົມທຶນເຂົ້າໃນການອະນາໄມລອກຮ່ອງລະບາຍນ້ຳໃນແຕ່ລະປີ;
- ປັບປຸງ ແລະ ກໍ່ສ້າງໂຮງງານບຳບັດນ້ຳເປື້ອນທີ່ອອກຈາກຄົວເຮືອນ, ໂຮງແຮມ, ຮ້ານອາຫານ ແລະ ໂຮງຈັກ, ໂຮງງານ;
- ກວດກາໃຫ້ຄະແນນນ້ຳສະອາດ ແລະ ປັບໃໝຜູ້ລະເມີດແຜນຜັງລະບາຍນ້ຳ, ຖິ້ມຂີ້ເຫຍື້ອລົງຮ່ອງນ້ຳ;

- ສັງຄົມຕ້ອງມີສ່ວນຮ່ວມໃນການປະກອບທຶນ, ແຮງງານເຂົ້າຊ່ວຍໃນການອະນາໄມ, ຈີກລອງຮ່ອງລະບາຍນໍ້າ ແລະ ຕໍານິຕິຕຽນຜູ້ລະເມີດ.

8. ແຜນວຽກທ້ອງຟ້າສົດໃສ:

- ກວດກາກິດຈະການ ແລະ ຄຸ້ມຄອງການຈູດຂີ້ເຫຍື້ອໃນເຫດສະພານຕົວເມືອງໂດຍແນະນໍາຄອບຄົວ, ສໍານັກງານອົງການ ຫຼືວໜ່ວຍທຸລະກິດ ບໍ່ໃຫ້ຈູດຂີ້ເຫຍື້ອ ດ້ວຍຕົນເອງ;
- ເຝົ້າລະວັງ ແລະ ຄວບຄຸມການຈູດປ່າ, ຈູດໄຮ່, ຈູດທົ່ງນາ, ໃຫ້ຫຼຸດລົງໃນແຕ່ລະປີ ແລະ ຢຸດຕິຢ່າງສິ້ນເຊີງ;
- ປັບປຸງ ແລະ ຂະຫຍາຍເຂດຂຽວ, ສວນສາທາລະນະ, ປູກຕົ້ນໄມ້ໃຫ້ຮົ່ມ ແລະ ຕົ້ນໄມ້ປະດັບໃນຕົວເມືອງ ແລະ ເຂດຂະຫຍາຍຕົວເມືອງໃໝ່ ເພື່ອຫຼຸດຜ່ອນສະພາບໂລກຮ້ອນ;
- ສ້າງໃຫ້ມີແສງສະຫວ່າງຕາມເສັ້ນທາງໃນເຫດສະພານ ແລະ ທາງຫຼວງແຫ່ງຊາດ;
- ປູກຕົ້ນໄມ້ເຮືອນຢູ່ ແລະ ເສັ້ນທາງ 2 ຕົ້ນ/ຄົນ/ປີ, ຮັກສາບຶງ, ໜອງໃຫຍ່ 10 ເຮັກຕາຂຶ້ນໄປ ເພື່ອເປັນອ່າງໂຕ່ງນໍ້າໃຫຍ່, ໃຫ້ຄວາມຊຸ່ມຊື່ນ;
- ລະດົມປະຊາຊົນເຂົ້າຮ່ວມໃນການເຮັດສັນຍາເກັບມ້ຽນຂີ້ເຫຍື້ອ;
- ສ້າງນິຕິກໍາຄຸ້ມຄອງຂີ້ເຫຍື້ອ;
- ປູກຈິດສໍານຶກ ການຄຸ້ມຄອງມົນລະພິດທາງອາກາດ;
- ສົ່ງເສີມໃຫ້ນັກລົງທຶນພາຍໃນ ແລະ ຕ່າງປະເທດຜູ້ທີ່ມີເງື່ອນໄຂປູກໄມ້ໃຫ້ເປັນປ່າ, ສົ່ງເສີມໃຫ້ສັງຄົມມີສ່ວນຮ່ວມໃນການປັບປຸງບູລະນະ ແລະ ຂະຫຍາຍເຂດຂຽວ, ສວນສາທາລະນະ, ປູກຕົ້ນໄມ້ໃຫ້ຮົ່ມ.

- **ກົນໄກການຈັດຕັ້ງປະຕິບັດ:**

- ທຸກຄອບຄົວ, ຫົວໜ່ວຍທຸລະກິດ, ສໍານັກງານອົງການ ຕ້ອງເຂົ້າຮ່ວມເຮັດສັນຍາໃຊ້ບໍລິການເກັບມ້ຽນຂີ້ເຫຍື້ອຂອງຕົນທີ່ຜະລິດຂຶ້ນ;
- ທຸກຄອບຄົວ, ຫົວໜ່ວຍທຸລະກິດ, ສໍານັກງານອົງການ ຕ້ອງມີສ່ວນຮ່ວມໃນການຕິດຕັ້ງໄຟແສງສະຫວ່າງໃນຂອບເຂດຄວາມຮັບຜິດຊອບຂອງຕົນ;
- ຕິດຕາມກວດກາຊຸກຍູ້ໃຫ້ປະຊາຊົນຢຸດຕິການຖາງປ່າເຮັດໄຮ່, ເຮັດສວນ, ຈູດເຜົາຂີ້ເຫຍື້ອ, ຫຼຸດຜ່ອນການດັງຝືນ;
- ປັບໃໝ, ລົງໂທດ ຕໍ່ຜູ້ທີ່ຈູດຂີ້ເຫຍື້ອຊະຊາຍ, ຈູດປ່າ, ຈູດໄຮ່ ແລະ ຈູດທົ່ງນາ;
- ປູກຈິດສໍານຶກໃຫ້ນັກຮຽນ, ນັກສຶກສາ, ພໍ່ແມ່ປະຊາຊົນ ໃນການຄຸ້ມຄອງມົນລະພິດ ແລະ ການປ່ຽນແປງທາງດິນຟ້າອາກາດ.

ມາດຕາ 9 ວິທີການ ແລະ ມາດຕະການຈັດຕັ້ງປະຕິບັດ ການສ້າງນະຄອນຫຼວງວຽງຈັນ ສະອາດ

1. ຂະແໜງການກ່ຽວຂ້ອງເປັນເຈົ້າການໃນການປະຊາສໍາພັນ, ສຶກສາອົບຮົມ, ປຸກລະດົມ, ບຸກຄົນ, ນິຕິບຸກຄົນ ໃຫ້ເຊື່ອມຊຶມຄວາມໝາຍ ຄວາມສໍາຄັນຂອງການສ້າງນະຄອນຫຼວງວຽງຈັນ ໃຫ້ເປັນນະຄອນສະອາດ ແລະ ຜົນເສຍຫາຍ ທີ່ເຮັດໃຫ້ຕົວເມືອງບໍ່ມີຄວາມສະອາດ;

2. ໃຫ້ຂະແໜງການກ່ຽວຂ້ອງເຜີຍແຜ່ກົດໝາຍ ນິຕິກໍາ ແລະ ລະບຽບການຕ່າງໆທີ່ກ່ຽວຂ້ອງກັບຕົນ ດ້ວຍຮູບການແຈ້ງ, ອອກຂໍ້ແນະນໍາ, ສ້າງປຶ້ມຄູ່ມື ແລະ ນໍາໃຊ້ສື່ມວນຊົນປະເພດຕ່າງໆທີ່ກ່ຽວຂ້ອງ ກັບການເຮັດໃຫ້ຕົວເມືອງມີຄວາມສະອາດສວຍງາມ;

3. ປຸກລະດົມໃຫ້ມີສະຕິ, ມີວິໄນ ແລະ ເສີມຂະຫຍາຍສິດເປັນເຈົ້າຂອງຕົນເອງ ຂອງປະຊາຊົນທີ່ດໍາລົງຊີວິດໃນຕົວເມືອງ ໃຫ້ເຄົາລົບກົດໝາຍ, ລະບຽບການ, ນາຍບ້ານ, ຫົວໜ້າໜ່ວຍສິບຫລັງຄາເຮືອນ ຕ້ອງເປັນເຈົ້າການໃນການສ້າງຄວາມສະອາດ;

4. ເປັນພັນທະໜ້າທີ່ຂອງພົນລະເມືອງ, ຖືປະຊາຊົນເປັນກຳລັງແຮງສະກັດກັ້ນ ແລະ ເຮັດໃຫ້ຕົວເມືອງມີຄວາມສະອາດ (ບ້ານຂອງຕົນເອງ);

5. ດຳເນີນການທາງບໍລິຫານ ແລະ ກົດໝາຍຕາມຂະແໜງການຂອງຕົນ ເພື່ອແກ້ໄຂສ້າງນະຄອນຫຼວງວຽງຈັນ ໃຫ້ເປັນນະຄອນສະອາດ ຢ່າງເໝາະສົມຕໍ່ບຸກຄົນ, ນິຕິບຸກຄົນ ທີ່ລະເມີດລະບຽບກົດໝາຍ ແລະ ລະບຽບການທີ່ຕິດພັນກັບຂະແໜງການຂອງຕົນ;

6. ທຸກຄອບຄົວ, ຫົວໜ່ວຍທຸລະກິດ, ສຳນັກງານອົງການຕ້ອງເຂົ້າຮ່ວມເຮັດສັນຍາກັບມ້ຽນຂີ້ເຫຍື້ອ;

7. ຈັດຕັ້ງໜ່ວຍງານກວດກາ ແລະ ປະເມີນຄວາມສະອາດ ຊຶ່ງປະກອບດ້ວຍບັນດາພະແນກການ ແລະ ຫ້ອງການທີ່ກ່ຽວຂ້ອງເຂົ້າຮ່ວມເປັນຄະນະ (ຄບຕ, ຍທຂ, ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ພະແນກອຸດສາຫະກຳ ແລະ ການຄ້າ, ຕຳຫຼວດຈະລາຈອນ, ເມືອງ ແລະ ບ້ານ ເຮັດໜ້າທີ່ໃຫ້ໃບປະເມີນຄວາມສະອາດ 5 ປະເພດ) ດ້ວຍເຄື່ອງໝາຍ :

| | | | |
|---|---|---|---|
| (1). | ສີຂາວ = ດີ; | (4). | ສີແດງ = ປັບໃໝ; |
| (2). | ສີຂຽວ = ພໍໃຊ້; | (5). | ສີດຳ = ໃຫ້ຍຸດຕິກິດຈະການ. |
| (3). | ສີເຫຼືອງ = ຕັກເຕືອນ | | |

## ໝວດທີ 3
## ອົງການຄຸ້ມຄອງ ແລະ ຕິດຕາມກວດກາ

### ມາດຕາ 10 ອົງການຄຸ້ມຄອງ ແລະ ຈັດຕັ້ງປະຕິບັດ

ອົງການປົກຄອງນະຄອນຫຼວງວຽງຈັນ ເປັນຜູ້ຮັບຜິດຊອບ ໃນການຈັດຕັ້ງປະຕິບັດສ້າງນະຄອນຫຼວງວຽງຈັນສະອາດ ເຊິ່ງປະກອບດ້ວຍ:

1 ຫ້ອງການຄຸ້ມຄອງ ແລະ ບໍລິການຕົວເມືອງວຽງຈັນ;
2 ພະແນກໂຍທາທິການ ແລະ ຂົນສົ່ງ ນະຄອນຫຼວງວຽງຈັນ;
3 ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ນະຄອນຫຼວງວຽງຈັນ;
4 ພະແນກອຸດສາຫະກຳ ແລະ ການຄ້າ ນະຄອນຫຼວງວຽງຈັນ;
5 ພະແນກສາທາລະນະສຸກ ນະຄອນຫຼວງວຽງຈັນ;
6 ກອງບັນຊາການ ປກສ ນະຄອນຫຼວງວຽງຈັນ;
7 ພະແນກກະສິກຳ ແລະ ປ່າໄມ້ ນະຄອນຫຼວງວຽງຈັນ;
8 ພະແນກສຶກສາທິການ ແລະ ກິລາ ນະຄອນຫຼວງວຽງຈັນ;
9 ອົງການປົກຄອງເມືອງ;
10 ອົງການປົກຄອງບ້ານ;
11 ຂະແໜງການອື່ນໆທີ່ກ່ຽວຂ້ອງ.

### ມາດຕາ 11 ສິດ ແລະ ໜ້າທີ່ ລວມຂອງອົງການຄຸ້ມຄອງ

1. ຫ້ອງການຄຸ້ມຄອງ ແລະ ບໍລິການຕົວເມືອງວຽງຈັນ:

- ຮັບຜິດຊອບໃນການພັນຂະຫຍາຍຂໍ້ຕົກລົງສະບັບນີ້ ແລະ ຄຸ້ມຄອງຢ່າງລວມສູນ ໃນວຽກງານຮັກສາຄວາມສະອາດ ໃນຕົວເມືອງ ແລະ ຊານເມືອງ (ສ ສະອາດ), ໂຄສະນາເຜີຍແຜ່ ປຸກຈິດສຳນຶກໃຫ້ທົ່ວສັງຄົມຮັບຮູ້ເປັນເຈົ້າການໃນການຈັດຕັ້ງປະຕິບັດ ສ້າງນະຄອນຫຼວງວຽງຈັນສະອາດ;
- ຮັບຜິດຊອບໂດຍກົງ ໃນການຄຸ້ມຄອງ, ຈັດຕັ້ງປະຕິບັດ ເປົ້າໝາຍອະນາໄມເສັ້ນທາງ, ອະນາໄມຮ່ອງລະບາຍນ້ຳ, ເກັບມ້ຽນຂີ້ນສິ່ງຂີ້ເຫຍື້ອ, ວຽກນ້ຳເປື້ອນ (ອາຈົມຈາກຄົວເຮືອນ) ແລະ ຕິດຕາມ, ກວດກາການຈັດສັນຄວາມບໍ່ເປັນລະບຽບຮຽບຮ້ອຍໃນຕົວເມືອງ ແລະ ຊານເມືອງ;
- ຊຸກຍູ້, ຕິດຕາມ ແລະ ກວດກາການຈັດຕັ້ງປະຕິບັດ 8 ເປົ້າໝາຍ ໃນການສ້າງນະຄອນຫຼວງວຽງຈັນສະອາດ;
- ຄຸ້ມຄອງ, ຕິດຕາມ ແລະ ກວດກາ ການເຄື່ອນໄຫວຂອງຜູ້ປະກອບການອະນາໄມ, ຂົນສົ່ງຂີ້ເຫຍື້ອ ແລະ ສະໜາມກຳຈັດຂີ້ເຫຍື້ອ ລວມທັງການເຮັດສັນຍາເກັບມ້ຽນຂີ້ເຫຍື້ອຄົວເຮືອນ;
- ປັບໃໝຕໍ່ຜູ້ລະເມີດ ສ້າງຄວາມບໍ່ສະອາດໃສ່ຕົວເມືອງ ແລະ ຊານເມືອງ;
- ຂື້ນແຜນງົບປະມານ ແລະ ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ເພື່ອຈັດຕັ້ງປະຕິບັດວຽກງານສ້າງນະຄອນຫຼວງວຽງຈັນ ສະອາດ;
- ສະຫຼຸບຕີລາຄາ, ປະເມີນຜົນ ແລະ ຖອດຖອນບົດຮຽນ ກ່ຽວກັບວຽກງານສ້າງນະຄອນຫຼວງວຽງຈັນສະອາດ ໃຫ້ອົງການປົກຄອງນະຄອນຫຼວງວຽງຈັນ ເປັນປົກກະຕິ.

2. ພະແນກໂຍທາທິການ ແລະ ຂົນສົ່ງ ນະຄອນຫຼວງວຽງຈັນ:

- ຮັບຜິດຊອບໂດຍກົງ ໂຄສະນາເຜີຍແຜ່, ສຶກສາອົບຮົມ, ປຸກຈິດສຳນຶກ ແລະ ຍົກລະດັບຄວາມຕື່ນຕົວພ້ອມທັງຄຸ້ມຄອງ, ກວດກາ ແລະ ແກ້ໄຂບັນຫາ ໃນການຈັດຕັ້ງປະຕິບັດເປົ້າໝາຍ ເຮັດໃຫ້ພາຫະນະສະອາດ, ເສັ້ນທາງສະອາດ, ເຄຫາສະຖານສະອາດ, ສະຖານທີ່ກໍ່ສ້າງສະອາດ ໃນເຂດຕົວເມືອງ ຕາມທີ່ກຳນົດໄວ້ໃນມາດຕາ 7 ແລະ 8, ຂໍ້ 1, 2, 3 ແລະ 4 ຂີດໜ້າທີ 2 ຂອງຂໍ້ຕົກລົງສະບັບນີ້;
- ຮັບຜິດຊອບງົບປະມານຮັບໃຊ້ວຽກງານທີ່ຈຳເປັນຂອງຕົນ;
- ສະຫຼຸບຕີລາຄາ, ປະເມີນຜົນ, ຖອດຖອນບົດຮຽນ ແລະ ລາຍງານຜົນສ້າງນະຄອນຫຼວງວຽງຈັນ ສະອາດ ໃນເປົ້າໝາຍຄວາມຮັບຜິດຊອບຂອງຕົນ ໃຫ້ຫ້ອງການຄຸ້ມຄອງ ແລະ ບໍລິການຕົວເມືອງວຽງຈັນ ເພື່ອສັງລວມລາຍງານອົງການປົກຄອງນະຄອນຫຼວງວຽງຈັນ ຢ່າງເປັນປົກກະຕິ.

3. ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ນະຄອນຫຼວງວຽງຈັນ:

- ຮັບຜິດຊອບໂດຍກົງ ໃນການໂຄສະນາເຜີຍແຜ່ສຶກສາອົບຮົມ, ປຸກຈິດສຳນຶກ ແລະ ຍົກລະດັບຄວາມຕື່ນຕົວທາງດ້ານສິ່ງແວດລ້ອມ ກວດກາມົນລະພິດທາງອາກາດ, ຄຸນນະພາບນ້ຳ ແລະ ຄວບຄຸມການຈູດຂີ້ເຫຍື້ອ, ຈູດປ່າຊະຊາຍ ໃນເຂດຕົວເມືອງ ແລະ ຊານເມືອງ;
- ຮັບຄຳສະເໜີ ຕາມທີ່ລະບຸໄວ້ໃນມາດຕາ 7 ຂໍ້ 5, 7 ແລະ 8, ມາດຕາ 8 ຂໍ້ 7 ແລະ 8 ຈາກປະຊາຊົນກ່ຽວກັບບັນຫາການດັ່ງກ່າວ ແລະ ດຳເນີນການແກ້ໄຂ ຢ່າງທັນການ;
- ຮັບຜິດຊອບງົບປະມານຮັບໃຊ້ວຽກງານທີ່ຈຳເປັນຂອງຕົນ;
- ສະຫຼຸບຕີລາຄາ, ປະເມີນຜົນ, ຖອດຖອນບົດຮຽນ ແລະ ລາຍງານຜົນສ້າງນະຄອນຫຼວງວຽງຈັນ ສະອາດ ໃນເປົ້າໝາຍຄວາມຮັບຜິດຊອບຂອງຕົນ ໃຫ້ຫ້ອງການຄຸ້ມຄອງ ແລະ ບໍລິການຕົວເມືອງວຽງຈັນ ເພື່ອສັງລວມລາຍງານອົງການປົກຄອງນະຄອນຫຼວງວຽງຈັນ ຢ່າງເປັນປົກກະຕິ.

4. ພະແນກອຸດສາຫະກຳ ແລະ ການຄ້າ ນະຄອນຫຼວງວຽງຈັນ:

- ຮັບຜິດຊອບໂດຍກົງ ໂຄສະນາເຜີຍແຜ່, ສຶກສາອົບຮົມ, ປຸກຈິດສຳນຶກ ແລະ ຍົກລະດັບຄວາມຕື່ນຕົວພ້ອມທັງຄຸ້ມຄອງ, ກວດກາ ແລະ ແກ້ໄຂບັນຫາ ຕະຫຼາດ, ສູນການຄ້າ ແລະ ໂຮງຈັກໂຮງງານ ໃນເຂດຕົວເມືອງ ຕາມທີ່ລະບຸໄວ້ໃນມາດຕາ 7 ຂໍ້ 4 ຂີດໜ້າ 3, ຂໍ້ 5 ແລະ ມາດຕາ 8 ຂໍ້ 4 ຂີດໜ້າ 8, ຂໍ້ 5 ແລະ ຂໍ້ 6 ຂີດໜ້າ 5 ຂອງຂໍ້ຕົກລົງສະບັບນີ້;
- ຮັບຜິດຊອບງົບປະມານຮັບໃຊ້ວຽກງານທີ່ຈຳເປັນຂອງຕົນ;

- ສະຫຼຸບຕີລາຄາ, ປະເມີນຜົນ, ຖອດຖອນບົດຮຽນ ແລະ ລາຍງານຜົນສ້າງນະຄອນຫຼວງວຽງຈັນ ສະອາດ ໃນເປົ້າໝາຍຄວາມຮັບຜິດຊອບຂອງຕົນ ໃຫ້ຫ້ອງການຄຸ້ມຄອງ ແລະ ບໍລິການຕົວເມືອງວຽງຈັນ ເພື່ອສັງລວມ ລາຍງານອົງການປົກຄອງນະຄອນຫຼວງວຽງຈັນ ຢ່າງເປັນປົກກະຕິ.

5. ພະແນກສາທາລະນະສຸກ ນະຄອນຫຼວງວຽງຈັນ:

- ຮັບຜິດຊອບໂດຍກົງ ໂຄສະນາເຜີຍແຜ່, ສຶກສາອົບຮົມ, ປູກຈິດສຳນຶກ ແລະ ຍົກລະດັບຄວາມຕື່ນຕົວ ພ້ອມທັງຄຸ້ມຄອງ, ກວດກາ ແລະ ແກ້ໄຂບັນຫາ ໃນເຂດຕົວເມືອງ ຕາມທີ່ລະບຸໄວ້ໃນມາດຕາ 7 ຂໍ້ 6 ຂີດໜ້າ 1, 3, 4 ແລະ ມາດຕາ 8 ຂໍ້ 4 ຂີດໜ້າ 4, ຂໍ້ 6 ຂີດໜ້າ 2, 3 ແລະ ຂໍ້ 7 ຂີດໜ້າ 2 ຂອງຂໍ້ຕົກລົງສະບັບນີ້;
- ຮັບຜິດຊອບງົບປະມານຮັບໃຊ້ວຽກງານທີ່ຈຳເປັນຂອງຕົນ;
- ສະຫຼຸບຕີລາຄາ, ປະເມີນຜົນ, ຖອດຖອນບົດຮຽນ ແລະ ລາຍງານຜົນສ້າງນະຄອນຫຼວງວຽງຈັນ ສະອາດ ໃນເປົ້າໝາຍຄວາມຮັບຜິດຊອບຂອງຕົນ ໃຫ້ຫ້ອງການຄຸ້ມຄອງ ແລະ ບໍລິການຕົວເມືອງວຽງຈັນ ເພື່ອສັງລວມ ລາຍງານອົງການປົກຄອງນະຄອນຫຼວງວຽງຈັນ ຢ່າງເປັນປົກກະຕິ.

6. ກອງບັນຊາການປ້ອງກັນຄວາມສະຫງົບ ນະຄອນຫຼວງວຽງຈັນ:

- ມີໜ້າທີ່ ເຂົ້າຮ່ວມຕິດຕາມ, ກວດກາ ແລະ ນຳໃຊ້ມາດຕະການ ຕໍ່ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ, ລວມທັງຊາວຕ່າງດ້າວ, ຄົນບໍ່ມີສັນຊາດ ແລະ ຊາວຕ່າງປະເທດ ທີ່ສ້າງຄວາມບໍ່ສະອາດໃນຕົວເມືອງ ແລະ ຊານເມືອງ;
- ສົມທົບກັບພາກສ່ວນກ່ຽວຂ້ອງ ແລະ ອົງການປົກຄອງບ້ານ, ເມືອງ ສຶກສາອົບຮົມ, ປັບໃໝ ຫຼື ດຳເນີນ ຄະດີຕໍ່ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ, ລວມທັງຊາວຕ່າງດ້າວ, ຄົນບໍ່ມີສັນຊາດ ແລະ ຊາວຕ່າງ ປະເທດ ຜູ້ທີ່ ລະເມີດຂໍ້ຕົກລົງສະບັບນີ້ ແລະ ລະບຽບການອື່ນໆທີ່ກ່ຽວຂ້ອງ, ບໍ່ໃຫ້ຄວາມຮ່ວມມື ແລະ ຂັດຂວາງໃນເວລາ ປະຕິບັດໜ້າທີ່ວຽກງານ ຂອງເຈົ້າໜ້າທີ່.

7. ພະແນກກະສິກຳ ແລະ ປ່າໄມ້ ນະຄອນຫຼວງວຽງຈັນ

- ຮັບຜິດຊອບໂດຍກົງ ໂຄສະນາເຜີຍແຜ່, ສຶກສາອົບຮົມ, ປູກຈິດສຳນຶກ ແລະ ຍົກລະດັບຄວາມຕື່ນຕົວ ພ້ອມທັງຄຸ້ມຄອງ, ກວດກາ ແລະ ແກ້ໄຂບັນຫາ ໃນເຂດຕົວເມືອງ ຕາມທີ່ກຳນົດໄວ້ໃນມາດຕາ 7 ຂໍ້ 6 ຂີ້ໜ້າ 2, 3 ແລະ ມາດຕາ 8 ຂໍ້ 6 ຂີດໜ້າ 1, 4, 5, 6, 7 ຂອງຂໍ້ຕົກລົງສະບັບນີ້;
- ຮັບຜິດຊອບງົບປະມານຮັບໃຊ້ວຽກງານທີ່ຈຳເປັນຂອງຕົນ;
- ສະຫຼຸບຕີລາຄາ, ປະເມີນຜົນ, ຖອດຖອນບົດຮຽນ ແລະ ລາຍງານຜົນສ້າງນະຄອນຫຼວງວຽງຈັນ ສະອາດ ໃນເປົ້າໝາຍຄວາມຮັບຜິດຊອບຂອງຕົນ ໃຫ້ຫ້ອງການຄຸ້ມຄອງ ແລະ ບໍລິການຕົວເມືອງວຽງຈັນ ເພື່ອສັງລວມ ລາຍງານອົງການປົກຄອງນະຄອນຫຼວງວຽງຈັນ ຢ່າງເປັນປົກກະຕິ.

8. ພະແນກສຶກສາທິການ ແລະ ກິລາ ນະຄອນຫຼວງວຽງຈັນ

- ຮັບຜິດຊອບໂດຍກົງ ໂຄສະນາເຜີຍແຜ່, ສຶກສາອົບຮົມ, ປູກຈິດສຳນຶກ ແລະ ຍົກລະດັບຄວາມຕື່ນຕົວ ພ້ອມທັງຄຸ້ມຄອງ, ກວດກາ ແລະ ແກ້ໄຂບັນຫາ ໃນເຂດຕົວເມືອງ ຕາມທີ່ກຳນົດໄວ້ໃນມາດຕາ 7 ຂໍ້ 4 ຂີດໜ້າ 4, 8 ແລະ ມາດຕາ 8 ຂໍ້ 4 ຂີດໜ້າ 4, 6 ຂອງຂໍ້ຕົກລົງສະບັບນີ້;
- ຮັບຜິດຊອບງົບປະມານຮັບໃຊ້ວຽກງານທີ່ຈຳເປັນຂອງຕົນ;
- ສະຫຼຸບຕີລາຄາ, ປະເມີນຜົນ, ຖອດຖອນບົດຮຽນ ແລະ ລາຍງານຜົນສ້າງນະຄອນຫຼວງວຽງຈັນ ສະອາດ ໃນເປົ້າໝາຍຄວາມຮັບຜິດຊອບຂອງຕົນ ໃຫ້ຫ້ອງການຄຸ້ມຄອງ ແລະ ບໍລິການຕົວເມືອງວຽງຈັນ ເພື່ອສັງລວມ ລາຍງານອົງການປົກຄອງນະຄອນຫຼວງວຽງຈັນ ຢ່າງເປັນປົກກະຕິ.

9. ອົງການປົກຄອງເມືອງ:

- ຈັດຕັ້ງປະຕິບັດກົດໝາຍ, ດຳລັດ, ອອກນິຕິກຳ ແລະ ລະບຽບການທີ່ກ່ຽວຂ້ອງ;

- ບັນຊາ ແລະ ອຳນວຍຄວບຄຸມການຈັດຕັ້ງປະຕິບັດຂອງໜ່ວຍງານ, ຫ້ອງການ ແລະ ອົງການອ້ອມຂ້າງຂອງເມືອງ ແລະ ຊີ້ນຳການຈັດຕັ້ງປະຕິບັດຢູ່ຂັ້ນເມືອງ, ຂັ້ນອົງການປົກຄອງບ້ານຢ່າງລວມສູນ, ເປັນເອກະພາບທົ່ວເມືອງຂອງຕົນ;
- ໃຫ້ການແນະນຳ, ອຳນວຍຊ່ວຍເຫຼືອໃຫ້ພະນັກງານ ແລະ ເຈົ້າໜ້າທີ່ຜູ້ປະຕິບັດວຽກງານຮັກສາຄວາມສະອາດຂອງຕົວເມືອງ;
- ແນະນຳພະນັກງານ, ລັດຖະກອນ, ກຳມະກອນ, ນັກຮຽນນັກສຶກສາ ປຸກລະດົມໃຫ້ຜູ້ປະກອບການ ແລະ ປະຊາຊົນເຂົ້າໃຈ ແລະ ໃຫ້ຄວາມຮ່ວມມືໃນການຮັກສາຄວາມສະອາດທົ່ວເມືອງ;
- ອະນຸມັດງົບປະມານທີ່ຈຳເປັນເຂົ້າໃນວຽກງານຮັກສາຄວາມສະອາດຕາມຄວາມຈຳເປັນ ແລະ ເໝາະສົມ;
- ຕິດຕາມກວດກາ ການເຄື່ອນໄຫວປະຕິບັດໜ້າທີ່ຂອງແຕ່ລະອົງກອນ ແລະ ພະນັກງານຕາມການແບ່ງງານ;
- ສະຫຼຸບຕີລາຄາ ແລະ ລາຍງານຜົນການຈັດຕັ້ງປະຕິບັດວຽກງານ ໃຫ້ອົງການປົກຄອງນະຄອນຫຼວງວຽງຈັນ
- ພິຈາລະນາຂໍ້ສະເໜີຂອງຂະແໜງການຕ່າງໆ, ຫ້ອງການ ແລະ ອົງການປົກຄອງບ້ານ ທີ່ພົວພັນເຖິງການຮັກສາຄວາມສະອາດໃນຕົວເມືອງ;
- ມີສິດໜ້າທີ່ອື່ນໆຕາມກົດໝາຍກຳນົດ ແລະ ການມອບໝາຍຂອງອົງການປົກຄອງນະຄອນຫຼວງວຽງຈັນ.

10. ອົງການປົກຄອງບ້ານ:

- ເຜີຍແຜ່, ແນະນຳເປົ້າໝາຍກິດຈະກຳຈຸດສຸມ ແລະ ມາດຕະການຈັດສັນຄວາມເປັນລະບຽບຮຽບຮ້ອຍໃຫ້ປະຊາຊົນ ຮັບຮູ້, ເຂົ້າໃຈ, ເຊື່ອມຊຶມ ແລະ ເຂົ້າຮ່ວມຂະບວນການອະນາໄມພາຍໃນບ້ານຂອງຕົນ;
- ສ້າງແຜນ ແລະ ຈັດກິດຈະກຳອະນາໄມຮັກສາຄວາມສະອາດຢູ່ພາຍໃນບ້ານຂອງຕົນຕາມຄວາມເໝາະສົມ;
- ລະດົມທຶນ, ວັດຖຸປັດໃຈ ແລະ ການມີສ່ວນຮ່ວມຂອງປະຊາຊົນ ໃນການຈັດຕັ້ງຂະບວນການອອກແຮງງານອະນາໄມຮັກສາຄວາມສະອາດ ຢູ່ພາຍໃນບ້ານຂອງຕົນ;
- ຈັດກອງປະຊຸມບ້ານ ເພື່ອປຶກສາຫາລືແກ້ໄຂ ຈຸດຫຍຸ້ງຍາກຄ້າງຄາ ເພື່ອຄວາມເປັນເອກະພາບກ່ຽວກັບວຽກງານອະນາໄມຮັກສາຄວາມສະອາດ ຢູ່ພາຍໃນບ້ານຂອງຕົນໃຫ້ໄດ້ຮັບຜົນດີ;
- ທັກທ້ວງ, ຕັກເຕືອນ, ປັບໃໝ ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ, ລວມທັງຄົນບໍ່ມີສັນຊາດ, ຊາວຕ່າງປະເທດ ແລະ ຊາວຕ່າງດ້າວ ທີ່ລະເມີດລະບຽບ ໃນຂອບເຂດບ້ານຂອງຕົນໂດຍປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ;
- ສະຫຼຸບ ແລະ ລາຍງານວຽກອະນາໄມຮັກສາຄວາມສະອາດຂອງບ້ານຕົນ ໃຫ້ອົງການປົກຄອງເມືອງ;
- ປະຕິບັດສິດ ແລະ ໜ້າທີ່ອື່ນໆ ຕາມກົດໝາຍ, ລະບຽບການ ແລະ ການມອບໝາຍ ຂອງອົງການປົກຄອງເມືອງ.

**ມາດຕາ 12 ອົງການຕິດຕາມ ແລະ ກວດກາ:**

- ອົງການກວດກາພາຍໃນແມ່ນອົງການດຽວກັນກັບ ອົງການຄຸ້ມຄອງການສ້າງນະຄອນຫຼວງວຽງຈັນສະອາດ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 10 ຂອງຂໍ້ຕົກລົງສະບັບນີ້;
- ອົງການກວດກາພາຍນອກປະກອບດ້ວຍ: ສະພາປະຊາຊົນນະຄອນຫຼວງວຽງຈັນ, ອົງການແນວລາວສ້າງຊາດ, ສະຫະພັນກຳມະບານ, ສະຫະພັນນັກຮົບເກົ່າ, ສະຫະພັນແມ່ຍິງ, ຄະນະຊາວໜຸ່ມ, ອົງການຈັດຕັ້ງສັງຄົມ, ສື່ມວນຊົນ ນະຄອນຫຼວງ, ເມືອງ ແລະ ບ້ານ.

## ໝວດທີ 4

## ໜ້າທີ່ ແລະ ພັນທະຂອງຊາວນະຄອນຫຼວງວຽງຈັນ

ມາດຕາ 13 ໜ້າທີ່ຂອງຊາວນະຄອນຫຼວງວຽງຈັນ

1. ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ, ຄົນບໍ່ມີສັນຊາດ, ຊາວຕ່າງປະເທດ ແລະ ຊາວຕ່າງດ້າວ ທີ່ເຄື່ອນໄຫວ ແລະ ດຳລົງຊີວິດຢູ່ນະຄອນຫຼວງວຽງຈັນ ຕ້ອງເຮັດໜ້າທີ່ຮັກສາຄວາມສະອາດຕົວເມືອງ ແລະ ເຂົ້າຮ່ວມເຮັດສັນຍາເກັບມ້ຽນຂີ້ເຫຍື້ອ;

- ສຳລັບຜູ້ທີ່ມີເຮືອນ, ຮ້ານ, ສຳນັກງານອົງການ ທີ່ຕິດແຄມທາງ ມີພັນທະປະກອບສ່ວນຮັກສາ ແລະ ເຮັດອະນາໄມພື້ນທີ່ສາທາລະນະຢູ່ຂອບເຂດອ້ອມຮອບຂອງຕົນໃຫ້ສະອາດຢູ່ສະເໝີ;

2. ເຂົ້າຮ່ວມໃນການສ້າງຂະບວນການອອກແຮງງານລວມ ເຊັ່ນ: ອອກແຮງງານລວມວັນເສົາ, ຊົ່ວໂມງວຽງຈັນສະອາດ (ທຸກໆວັນພຸດ), ສັບປະດາວຽງຈັນສະອາດ ຫລື ວັນສຳຄັນຂອງພັກຂອງຊາດ ແລະ ງານອື່ນໆ;

- ອອກແຮງງານລວມວັນເສົາ ກຳນົດຕອນເຊົ້າ 6:00 ໂມງ ເຊິ່ງເປັນວຽກປົກກະຕິໃຫ້ແຕ່ລະພາກສ່ວນຮັບຜິດຊອບ;

- ຊົ່ວໂມງວຽງຈັນສະອາດ ກຳນົດເຮັດອະນາໄມຂອບເຂດຄວາມຮັບຜິດຊອບຂອງຕົນ ທຸກໆຕອນເຊົ້າວັນພຸດ ແຕ່ 5:00-6:00 ໂມງ;

- ສັບປະດາວຽງຈັນສະອາດ ກຳນົດເອົາ ເດືອນເມສາ ແຕ່ວັນທີ 1-7 ຂອງທຸກປີ ເພື່ອອະນາໄມຕົວເມືອງໃຫ້ມີຄວາມສະອາດ ແລະ ເປັນລະບຽບຮຽບຮ້ອຍ ຕ້ອນຮັບວັນບຸນປີໃໝ່ລາວ;

- ສຳລັບສະຖານທີ່ສາທາລະນະ ໂດຍສະເພາະຕະຫຼາດ, ຄົວລົດເມ, ໂຮງຮຽນ, ໂຮງໝໍ, ສຳນັກງານອົງການ ແລະ ອື່ນໆ ກຳນົດເອົາການເຮັດອະນາໄມ 2 ຄັ້ງຕໍ່ເດືອນ ຂອງວັນສຸກ.

ມາດຕາ 14 ພັນທະຂອງຊາວນະຄອນຫຼວງວຽງຈັນ

1. ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ, ຄົນບໍ່ມີສັນຊາດ, ຊາວຕ່າງປະເທດ ແລະ ຊາວຕ່າງດ້າວ ເຂົ້າຮ່ວມ ແລະ ປະກອບສ່ວນເຂົ້າໃນການຮັກສາອະນາໄມທຳຄວາມສະອາດ ໃຫ້ມີຄວາມສະອາດ ຮັບປະກັນບໍ່ໃຫ້ມີຂີ້ເຫຍື້ອ, ຄວາມເປິະເປື້ອນສິ່ງເສດເຫຼືອ ໃນເຂດຄວາມຮັບຜິດຊອບຂອງຕົນ;

2. ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ, ຄົນບໍ່ມີສັນຊາດ, ຊາວຕ່າງປະເທດ ແລະ ຊາວຕ່າງດ້າວ ຜູ້ພັກພາອາໃສຕາມສອງຟາກເສັ້ນທາງໃຫ້ມີຄວາມຕື່ນຕົວປະກອບສ່ວນ ເຂົ້າຮ່ວມພັດທະນາ, ປະດັບປະດາ ແລະ ຮັກສາເສັ້ນທາງໃຫ້ມີຄວາມສະອາດ;

3. ຊາວນະຄອນຫຼວງວຽງຈັນໝົດທຸກຄົນ ຕ້ອງໄດ້ປຸກຈິດສຳນຶກໃຫ້ແກ່ລູກຫຼານຂອງຕົນໃຫ້ມີສ່ວນຮ່ວມຄວາມຮັບຜິດຊອບ ເຮັດອະນາໄມເຮືອນ, ອາຄານ, ສຳນັກງານຫ້ອງການ ແລະ ພື້ນທີ່ສາທາລະນະອ້ອມຮອບໃຫ້ມີຄວາມສະອາດສວຍງາມຢູ່ຕະຫຼອດ ແລະ ຮັບຮູ້ເຖິງຄຸນປະໂຫຍດ, ເຫັນໄດ້ຄຸນຄ່າ ແລະ ໃຫ້ຄວາມສຳຄັນຕໍ່ການຮັກສາຄວາມສະອາດ ແລະ ພື້ນທີ່ສາທາລະນະອ້ອມຮອບດິນຂອງຕົນ ຕາມ 8 ຕົວຊີ້ວັດສະອາດ.

# ໝວດທີ 5

# ຜູ້ປະກອບການຮັກສາຄວາມສະອາດໃນຕົວເມືອງ

ມາດຕາ 15 ຜູ້ປະກອບການຮັກສາຄວາມສະອາດໃນຕົວເມືອງ

ຜູ້ປະກອບການ ບໍລິການຮັກສາຄວາມສະອາດໃນຕົວເມືອງ ປະກອບມີ :

1. ບໍລິການຂົນສິ່ງຂີ້ເຫຍື້ອ;
2. ບໍລິການອະນາໄມອາຄານ, ເຮືອນຢູ່ອາໃສ, ໂຮງແຮມ, ສຳນັກງານ-ອົງການ ແລະ ອື່ນໆ;
3. ບໍລິການອະນາໄມຖະໜົນຫົນທາງ ແລະ ສະຖານທີ່ສາທາລະນະ. ໒໓

**ມາດຕາ 16 ໜ້າທີ່ ແລະ ພັນທະ ຂອງຜູ້ປະກອບການຂົນສົ່ງຂີ້ເຫຍື້ອ**

1. ຕ້ອງເຄື່ອນໄຫວເຮັດບໍລິການຂົນສົ່ງຂີ້ເຫຍື້ອໃນຂອບເຂດພື້ນທີ່ ທີ່ຫ້ອງການ ຄບຕ ໄດ້ກຳນົດ ແລະ ຈັດສັນໃຫ້;

2. ການບໍລິການເກັບມ້ຽນຂີ້ເຫຍື້ອ ຕ້ອງປະຕິບັດຕາມສັນຍາ, ໂມງເວລາ, ມື້ນັດໝາຍຢ່າງເຂັ້ມງວດ;

3. ການເກັບມ້ຽນຂີ້ເຫຍື້ອຂຶ້ນລົດຕາມຈຸດຕ່າງໆໃນແຕ່ລະຄັ້ງ ຕ້ອງເກັບເອົາໃຫ້ໝົດ, ຕ້ອງປົກປິດໃຫ້ດີ ຮັບປະກັນບໍ່ໃຫ້ຕົກເຮ່ຍຕາມສະຖານທີ່ ຫລື ເສັ້ນທາງ ໂດຍເດັດຂາດ;

4. ຕ້ອງຂົນສົ່ງຂີ້ເຫຍື້ອໄປກຳຈັດຢູ່ສະໜາມ ທີ່ທາງການໄດ້ກຳນົດໃຫ້;

5. ພາຫະນະການຂົນສົ່ງຂີ້ເຫຍື້ອຕ້ອງສອດຄ່ອງຕາມມາດຕະຖານເຕັກນິກ ແລະ ຮັບປະກັນ;

6. ສຳລັບຂີ້ເຫຍື້ອຕິດເຊື້ອຈາກໂຮງໝໍ, ຄຼີນິກ ຕ້ອງມີພາຫະນະຂົນສົ່ງສະເພາະທີ່ານັ້ນ ຈຶ່ງສາມາດເຂົ້າໄປບໍລິການເກັບມ້ຽນ ແລະ ຂົນສົ່ງ ໄປກຳຈັດຢູ່ເຕົາເຜົາສະເພາະ, ແຕ່ຕ້ອງໄດ້ຮັບອະນຸຍາດຈາກ ຫ້ອງການ ຄບຕ;

7. ຕ້ອງໄດ້ຈ່າຍຄ່າບໍລິການສະໜາມກຳຈັດຂີ້ເຫຍື້ອ ແລະ ມອບພັນທະຕາມລະບຽບກົດໝາຍ;

8. ຖ້າໃນເຂດບ້ານ, ສຳນັກງານ ມີຂະບວນການອອກແຮງງານ, ເຮັດອະນາໄມລວມໝູ່ໃນເຂດບໍລິການທີ່ຕົນຮັບຜິດຊອບ ບໍລິສັດດັ່ງກ່າວ ຕ້ອງໄດ້ປະກອບສ່ວນພາຫະນະ ແລະ ກຳມະກອນ ຊ່ວຍເກັບມ້ຽນຂີ້ເຫຍື້ອຂະບວນການ ແລະ ຂີ້ເຫຍື້ອບໍ່ມີເຈົ້າຂອງຕາມສະຖານທີ່ສາທາລະນະ ແລະ ດິນເປົ່າຫວ່າງ.

**ມາດຕາ 17 ໜ້າທີ່ ແລະ ພັນທະ ຂອງຜູ້ປະກອບການບໍລິການອະນາໄມອາຄານ**

1. ອະນາໄມທຳຄວາມສະອາດດ້ານໃນ, ດ້ານນອກ ແລະ ບໍລິເວນອ້ອມຮອບ ຂອງອາຄານ;

2. ເຄື່ອງມືອຸປະກອນຮັບໃຊ້ ຕ້ອງໄດ້ມາດຕະຖານເຕັກນິກ ແລະ ຮັບປະກັນຄວາມປອດໄພ;

3. ພະນັກງານທຳຄວາມສະອາດ ຕ້ອງມີມະນຸດສຳພັນທີ່ດີ, ມີຄວາມຊື່ສັດ, ມີຄວາມຮັບຜິດຊອບຕໍ່ໜ້າທີ່ວຽກງານທີ່ໄດ້ຮັບມອບໝາຍ ແລະ ຕ້ອງໄດ້ຜ່ານການຝຶກອົບຮົມຄັກແນ່;

4. ຕ້ອງໄດ້ປະຕິບັດພັນທະ ຕາມລະບຽບກົດໝາຍ.

**ມາດຕາ 18 ໜ້າທີ່ ແລະ ພັນທະ ຂອງຜູ້ປະກອບການອະນາໄມຖະໜົນຫົນທາງ ແລະ ສະຖານທີ່ສາທາລະນະ.**

1. ອະນາໄມທຳຄວາມສະອາດຕາມເສັ້ນທາງ, ແຄມທາງ, ຮ່ອງລະບາຍນ້ຳແຄມທາງ, ຕັດຫຍ້າແຄມທາງ, ຕັດຕອນຮອນຫງ່າໄມ້ຕາມແຄມທາງ ແລະ ສວນສາທາລະນະ;

2. ພາຫະນະ, ເຄື່ອງມືອຸປະກອນຮັບໃຊ້ ຕ້ອງໄດ້ມາດຕະຖານເຕັກນິກ ແລະ ຮັບປະກັນຄວາມປອດໄພ.

3. ຕ້ອງໄດ້ປະຕິບັດພັນທະ ຕາມລະບຽບກົດໝາຍ;

## ໝວດທີ 6

## ແຫຼ່ງລາຍຮັບ ແລະ ການນຳໃຊ້ງົບປະມານ

ມາດຕາ 19 ແຫຼ່ງລາຍຮັບ:

1. ນະຄອນຫຼວງວຽງຈັນ ໄດ້ຈັດສັນ, ຄຸ້ມຄອງ ງົບປະມານໃນການສ້າງນະຄອນຫຼວງວຽງຈັນສະອາດ ໂດຍມີການຈັດສັນງົບປະມານແຫ່ງລັດປະຈຳປີ;

2. ການສະເໜີຂໍທຶນສະໜັບສະໜູນ ຈາກກອງທຶນປົກປັກຮັກສາສິ່ງແວດລ້ອມ;

3. ສ່ວນແບ່ງຈາກກອງທຶນທາງ; ~

4. ລາຍຮັບຈາກການເກັບມ້ຽນຂີ້ເຫຍື້ອ;

5. ລາຍຮັບນຳຜູ້ທີ່ສ້າງຄວາມເປ່ເພເສຍຫາຍຕໍ່ຊັບສິນບັດສາທາລະນະ;

6. ລາຍຮັບຈາກການປັບໃໝຕໍ່ຜູ້ທີ່ລະເມີດຄວາມສະອາດ ຕາມມາດຕາທີ 21;

7. ການປະກອບສ່ວນຂອງບຸກຄົນ, ນິຕິບຸກຄົນ ລວມທັງພາຍໃນ, ທຶນຈາກຕ່າງປະເທດ ແລະ ລາຍຮັບອື່ນໆຕາມລະບຽບການ.

**ມາດຕາ 20 ການນຳໃຊ້ງົບປະມານ (ລາຍຈ່າຍ):**

ເຈົ້າຄອງ, ຮອງເຈົ້າຄອງນະຄອນຫຼວງວຽງຈັນ ມີສິດສັ່ງຈ່າຍ, ນຳໃຊ້ງົບປະມານເຂົ້າໃນການສ້າງນະຄອນຫຼວງວຽງຈັນສະອາດຖືກຕ້ອງຕາມລະບຽບການ ແລະ ເປົ້າໝາຍ ບົນພື້ນຖານແຜນການນຳໃຊ້ງົບປະມານຂອງແຕ່ລະຂະແໜງການ ແລະ ແຜນການພັດທະນາໃນແຕ່ລະໄລຍະມີຄື:

1. ຈ່າຍຄ່າເຮັດອະນາໄມຄວາມສະອາດ ໃນຕົວເມືອງ ແລະ ຊານເມືອງ ຕາມມາດຕາ 7;

2. ຈ່າຍໃນການໂຄສະນາ, ເຜີຍແຜ່, ຕິດຕາມກວດກາ ແລະ ປະເມີນຜົນ;

3. ສ່ວນແບ່ງຈາກການປັບໃໝ ຈ່າຍໃຫ້ພາກສ່ວນປະຕິບັດຕົວຈິງ 70%;

4. ສ່ວນແບ່ງຈາກການປັບໃໝ ຈ່າຍເຂົ້າງົບປະມານ 30%.

## ໝວດທີ 7

## ຂໍ້ຫ້າມ, ນະໂຍບາຍຕໍ່ຜູ້ມີຜົນງານ, ມາດຕະການຕໍ່ຜູ້ລະເມີດ ມາດຕະການປັບໃໝ ແລະ ພາກສ່ວນຮັບຜິດຊອບໃນການປັບໃໝ

**ມາດຕາ 21 ຂໍ້ຫ້າມ**

ຫ້າມບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ, ຄົນບໍ່ມີສັນຊາດ, ຊາວຕ່າງປະເທດ ແລະ ຊາວຕ່າງດ້າວ ທີ່ເມີນເສີຍ ແລະ ສ້າງຄວາມບໍ່ສະອາດ, ຄວາມເປິເປື້ອນ ໃສ່ຖະໜົນ-ຫົນທາງ, ແຫຼ່ງນ້ຳ ແລະ ສະຖານທີ່ສາທາລະນະຕ່າງໆ ໃນຂອບເຂດນະຄອນຫຼວງວຽງຈັນ ຢ່າງເດັດຂາດ ຊຶ່ງເປັນສາເຫດເຮັດໃຫ້ມີຜົນກະທົບ ເຊັ່ນ: ເຮັດໃຫ້ໜ້າທາງເປື້ອນ; ຖິ້ມຂີ້ເຫຍື້ອຊະຊາຍໃສ່ແຄມທາງ, ແຫຼ່ງນ້ຳ, ດິນເປົ່າຫວ່າງ ແລະ ສະຖານທີ່ສາທາລະນະ; ຈູດຂີ້ເຫຍື້ອຊະຊາຍ; ປ່ອຍນ້ຳເສຍໃສ່ຫົນທາງ-ຮ່ອງລະບາຍນ້ຳ; ສ້າງຄວາມເປື້ອນເປິໃສ່ຖະໜົນຫົນທາງ; ພົ່ນສີ ຫຼື ທາສີ ໃສ່ຮົ້ວກຳແພງ, ພື້ນທີ່ສາທາລະນະ; ປ່ອຍດິນເປົ່າຫວ່າງໃຫ້ຮົກເຮື້ອ, ປ່ອຍເຮືອນໃຫ້ເກົ່າແກ່ ເພພັງບໍ່ສ້ອມແປງ ຫຼື ມ້າງອອກ ແລະ ອື່ນໆ.

**ມາດຕາ 22 ນະໂຍບາຍຕໍ່ຜູ້ມີຜົນງານ**

1. ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງທຸກພາກສ່ວນ ທີ່ມີຜົນງານດີເດັ່ນ ໃນການປະຕິບັດຂໍ້ຕົກລົງສະບັບນີ້ ຈະໄດ້ຮັບການຍ້ອງຍໍຕາມລະບຽບ ແລະ ກົດໝາຍ.

**ມາດຕາ 23 ມາດຕະການຕໍ່ຜູ້ລະເມີດ**

- ຕໍ່ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ, ຄົນບໍ່ມີສັນຊາດ, ຊາວຕ່າງປະເທດ ແລະ ຊາວຕ່າງດ້າວ ທີ່ດຳລົງຊີວິດ ແລະ ເຄື່ອນໄຫວຢູ່ນະຄອນຫຼວງວຽງຈັນ ທີ່ລະເມີດ ຂໍ້ຕົກລົງສະບັບນີ້ ຕາມມາດຕາ 22 ວ່າດ້ວຍຂໍ້ຫ້າມ ລ້ວນແຕ່ຈະຖືກ ປະຕິບັດມາດຕະການຕາມກໍລະນີໜັກ ຫຼື ເບົາ ດັ່ງລຸ່ມນີ້: ໒

1. ລະເມີດເປັນຄັ້ງທຳອິດ ແມ່ນຈະໄດ້ກ່າວເຕືອນ, ສຶກສາອົບຮົມ ເຮັດບົດບັນທຶກໄວ້, ຮັບຜິດຊອບປັບປຸງແປງໃຫ້ມີຄວາມສະອາດຄືເກົ່າ, ປັບໃໝ ແລະ ໃຊ້ແທນຄືນຄ່າເສຍຫາຍຂອງມູນຄ່າການເຮັດອະນາໄມ;

2. ລະເມີດຄັ້ງທີສອງ ຊຶ່ງບໍ່ເປັນການກະທຳຜິດທາງອາຍາ ແລະ ກໍ່ຄວາມເສຍຫາຍບໍ່ຫຼວງ ຫຼາຍ ຊຶ່ງໄດ້ຜ່ານການກ່າວເຕືອນ ຫຼື ສຶກສາອົບຮົມແລ້ວ ແມ່ນຈະຖືກປັບໃໝ ສາມເທົ່າຂອງມູນຄ່າຄວາມເສຍຫາຍ;

3. ລະເມີດສາມຄັ້ງຂຶ້ນໄປ ຈະຖືກປັບໃໝ 5-10 ເທົ່າຂອງມູນຄ່າຄວາມເສຍຫາຍ, ຈະຖືກຍຸບເລີກ, ລຶບລ້າງໃບອະນຸຍາດ ແລະ ຮື້ຖອນກິດຈະການ-ສະຖານທີ່ອອກທັງໝົດ;

4. ກໍລະນີເປັນການກະທຳຜິດທາງອາຍາແມ່ນຈະໄດ້ດຳເນີນຄະດີ ແລະ ລົງໂທດຕາມກົດໝາຍຢ່າງເຂັ້ມງວດ.

- ຕໍ່ພະນັກງານ, ເຈົ້າໜ້າທີ່ ທີ່ປະຕິບັດວຽກງານ ທີ່ເມີນເສີຍ ຫຼື ມີເຈດຕະນາບໍ່ເຂົ້າຮ່ວມ ຫຼື ຝ່າຝືນຂໍ້ຫ້າມໃນຂໍ້ຕົກລົງ ວ່າດ້ວຍ ການສ້າງນະຄອນຫຼວງວຽງຈັນສະອາດ (ສ. ສະອາດ) ສະບັບນີ້ ແລະ ກໍ່ຄວາມເສຍຫາຍ ຫຼືບ ຫຼີກຈາກຄວາມຜິດຕົນ ຈະຖືກປະຕິບັດວິໄນຕາມລະບຽບການ ແລະ ກົດໝາຍ ວ່າດ້ວຍລັດຖະກອນ ທີ່ໄດ້ກຳນົດອອກ.

## ມາດຕາ 24 ມາດຕະການປັບໃໝຕໍ່ຜູ້ລະເມີດ

ຜູ້ລະເມີດຄວາມສະອາດຂອງຕົວເມືອງ ຈະຖືກປັບໃໝ ຄື :

1. ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງໃດໜຶ່ງ ຫາກມີການວາງ ຫຼື ກອງ ວັດສະດຸກໍ່ສ້າງ ທີ່ເປັນການກີດຂວາງການຈະລາຈອນ ໃສ່ໜ້າທາງ, ແຄມທາງ, ທາງຍ່າງ ຫຼື ຮ່ອງນ້ຳແຄມທາງ ຈະຖືກປັບໃໝ 300.000 ກີບ ພ້ອມທັງໃຫ້ຍົກຍ້າຍວັດສະດຸກໍ່ສ້າງດັ່ງກ່າວອອກ ພາຍໃນ ຊາວສີ່ຊົ່ວໂມງ ພາຍຫຼັງທີ່ໄດ້ເຮັດບົດບັນທຶກຍົກຍ້າຍ, ຖ້າຫາກກາຍກຳນົດ ຜູ້ລະເມີດຈະຖືກປັບໃໝເພີ່ມຊົ່ວໂມງລະ 15.000 ກີບ ຕໍ່ ໜຶ່ງແມັດກ້ອນ. (ມາດຕາ 33 ຂອງດຳລັດ 568/ລບ, ລົງວັນທີ 16/9/2021);

2. ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ໃດໜຶ່ງ ຫາກປຸກສ້າງອາຄານ, ຕູບ, ຕໍ່ເທີບ, ຕໍ່ເຖີບ ຫຼື ອື່ນໆ ເຂົ້າໃນພື້ນທີ່ເຂດການຈະລາຈອນ, ເຂດສະຫງວນທາງຫຼວງ ໂດຍບໍ່ໄດ້ຮັບອະນຸຍາດຈາກຂະແໜງການທີ່ກ່ຽວຂ້ອງ ຈະຖືກປັບໃໝ 450.000 ກີບ ພ້ອມທັງໃຫ້ຍົກຍ້າຍ ຫຼື ມ້າງອອກພາຍໃນ ຊາວສີ່ຊົ່ວໂມງ ພາຍຫຼັງທີ່ໄດ້ເຮັດບົດບັນທຶກຍົກຍ້າຍ, ຖ້າຫາກກາຍກຳນົດເວລາດັ່ງກ່າວ ຈະປັບໃໝເພີ່ມ ຊົ່ວໂມງລະ 15.000 ກີບ (ມາດຕາ 34 ຂອງດຳລັດ 568/ລບ, ລົງວັນທີ 16/9/2021);

3. ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ໃດໜຶ່ງ ຫາກຈອດລົດ, ຕັ້ງຮ້ານ, ກາງເຕັ້ນ ເພື່ອຈັດງານຕ່າງໆ, ວາງເຄື່ອງຂອງ ຫຼື ຂາຍສິນຄ້າທຸກປະເພດ ໃສ່ທາງຫຼວງ, ຖະໜົນ, ປ່າທາງ ຫຼື ທາງຄົນຍ່າງ ຈະຖືກປັບໃໝ 80,000 ກີບຕໍ່ຄັ້ງ;

- ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ໃດໜຶ່ງ ຫາກດຳເນີນກິດຈະການຂາຍລົດ, ສ້ອມແປງລົດ, ຕັ້ງຮ້ານອາຫານ ຫຼື ວາງສິນຄ້າ ແລະ ການບໍລິການອື່ນໆ ໂດຍການນຳໃຊ້ພື້ນທີ່ຂອງທາງຫຼວງ, ແຄມທາງ, ທາງຄົນຍ່າງເປັນບ່ອນວາງຂາຍ, ສ້ອມແປງລົດ, ຕັ້ງໂຕະອາຫານ ຫຼື ວາງສິນຄ້າ ຈະຖືກປັບໃໝ 300.000 ກີບ ພ້ອມທັງໃຫ້ຍົກຍ້າຍອອກພາຍໃນຊາວສີ່ຊົ່ວໂມງ ພາຍຫຼັງທີ່ໄດ້ເຮັດບົດບັນທຶກຍົກຍ້າຍ, ຖ້າຫາກກາຍກຳນົດເວລາດັ່ງກ່າວຈະປັບໃໝເພີ່ມ ຊົ່ວ ໂມງລະ 15.000 ກີບ (ມາດຕາ 35 ຂອງດຳລັດ 568/ລບ, ລົງວັນທີ 16/9/2021);

4. ກໍລະນີ ມີການສ້າງຄວາມເປິເປື້ອນໃສ່ພື້ນທີ່ສາທາລະນະ ຈະຖືກປັບໃໝ ແລະ ຮັບຜິດຊອບອະນາໄມໃຫ້ສະອາດ ດັ່ງນີ້:

- ຜູ້ຂັບຂີ່ລົດບັນທຸກ ຫີນ, ດິນ, ຊາຍ, ວັດສະດຸອື່ນໆ ທີ່ບໍ່ມີການປົກຫຸ້ມ ຫຼື ເຮັດໃຫ້ ວັດສະດຸດັ່ງກ່າວຕົກເຮ່ຍໃສ່ທາງຫຼວງ ຫຼື ສ້າງຄວາມເປິເປື້ອນໃນເວລາຂົນສົ່ງ ເຂົ້າ, ອອກ ຈາກສະຖານທີ່ກໍ່ສ້າງ ຈະຖືກປັບໃໝ 150,000 ກີບ/ຄັ້ງ, ພ້ອມທັງຮັບຜິດຊອບເຮັດອານາໄມໃຫ້ສະອາດຄືນສູ່ສະພາບເດີມ;

- ຜູ້ທີ່ມີເຮືອນ, ອາຄານ, ຮ້ານບໍລິການ, ຮ້ານຄ້າຕາມແຄມທາງຫຼວງທີ່ປ່ອຍນ້ຳເປື້ອນ, ຖອກເທນ້ຳໃສ່ໜ້າທາງ ເຮັດໃຫ້ທາງມື່ນ, ເປັນບວກ, ຂຸມ ແລະ ເຮັດໃຫ້ເກີດອຸປະຕິເຫດ ຈະຖືກປັບໃໝ 500,000 ກີບ/ຄັ້ງ, ພ້ອມທັງຮັບຜິດຊອບປັບປຸງແກ້ໄຂໃຫ້ຄືນສູ່ສະພາບເດີມ. ໃນກໍລະນີເກີດອຸປະຕິເຫດ ຈາກການລະເມີດດັ່ງກ່າວ ຜູ້ທີ່

ລະເມີດຍັງຕ້ອງຮັບຜິດຊອບຄ່າເສຍຫາຍທີ່ເກີດຂຶ້ນທັງໝົດ (ມາດຕາ 43 ຂອງດຳລັດ 568/ລບ, ລົງວັນທີ 16/9/2021).

5. ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງໃດໜຶ່ງ ຫາກຖິ້ມຂີ້ເຫຍື້ອບໍ່ຖືກຈຸດ (ຖິ້ມຊະຊາຍ) ຈະຖືກປັບໃໝ ແລະ ພ້ອມທັງຮັບຜິດຊອບ ເຮັດອະນາໄມ ແລະ ເອົາໄປຖິ້ມ ຢູ່ສະຖານທີ່ ທີ່ທາງການໄດ້ກຳນົດ ດັ່ງນີ້:

- ກໍລະນີຖິ້ມຂີ້ເຫຍື້ອປະລິມານຕ່ຳກວ່າ 1 ກິໂລ ລົງມາ ຈະຖືກປັບໃໝ 50,000 ກີບ/ຄັ້ງ;
- ກໍລະນີຖິ້ມຂີ້ເຫຍື້ອປະລິມານເກີນ 1 ກິໂລ ຫາ 10 ກິໂລ ຈະຖືກປັບໃໝ 300.000 ກີບ/ຄັ້ງ;
- ກໍລະນີຖິ້ມຂີ້ເຫຍື້ອປະລິມານເກີນ 10 ກິໂລ ຫາ 50 ຈະຖືກປັບໃໝ 500,000 ກີບ/ຄັ້ງ;
- ກໍລະນີຖິ້ມຂີ້ເຫຍື້ອປະລິມານເກີນ 50 ກິໂລ ຫາ 100 ກິໂລ ຈະຖືກປັບໃໝ 1,000,000 ກີບ/ຄັ້ງ;
- ກໍລະນີຖິ້ມຂີ້ເຫຍື້ອປະລິມານເກີນ 100 ກິໂລ ຫາ 1,000 ກິໂລ ຈະຖືກປັບໃໝ 10,000,000 ກີບ/ຄັ້ງ;
- ກໍລະນີຖິ້ມຂີ້ເຫຍື້ອປະລິມານເກີນ 1,000 ກິໂລຂຶ້ນໄປ ຈະຖືກປັບໃໝ 50,000,000 ກີບ/ຄັ້ງ;

6. ລົດຂົນສົ່ງໂດຍສານທຸກປະເພດ ຫາກໄດ້ຖິ້ມ ຫຼື ປ່ອຍໃຫ້ຄົນໂດຍສານຂອງຕົນສ້າງຄວາມເປິເປື້ອນໃສ່ຖະໜົນຫົນທາງ ຈະຖືກປັບໃໝມູນຄ່າ 500,000 ກີບ/ຄັ້ງ;

7. ບຸກຄົນ, ນິຕິບຸກຄົນ, ອົງການຈັດຕັ້ງ ແລະ ໂຮງງານອຸດສາຫະກຳຕ່າງໆ ທີ່ປ່ອຍນ້ຳເປື້ອນໃສ່ຫົນທາງ, ຕະຄອງຮ່ອງລະບາຍນ້ຳ ແລະ ແມ່ນ້ຳ ຈະຖືກປັບໃໝ 500,000-5,000,000 ກີບ/ຄັ້ງ;

8. ພາຫະນະ ຂອງບຸກຄົນ, ນິຕິບຸກຄົນ, ອົງການຈັດຕັ້ງ ແລະ ໂຮງງານອຸດສາຫະກຳຕ່າງໆ ທີ່ປ່ອຍອາຍພິດ (ຄວັນຂາວ-ຄວັນດຳ) ເກີນມາດຕະຖານ ຂອງກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມກຳນົດ ຂຶ້ນທ້ອງຟ້າ ຈະຖືກປັບໃໝ 500,000-5,000,000 ກີບ/ຄັ້ງ;

9. ບຸກຄົນ, ນິຕິບຸກຄົນ ທີ່ຈູດຂີ້ເຫຍື້ອ ຈະຖືກປັບໃໝ 500,000-5,000,000 ກີບ/ຄັ້ງ;

10. ບຸກຄົນ, ນິຕິບຸກຄົນ ທີ່ພົ່ນສີ, ທາສີ ໃສ່ຮົ້ວກຳແພງ, ພື້ນທີ່ສາທາລະນະ ແລະ ປ້າຍຈະລາຈອນ ທີ່ສ້າງຄວາມເປິເປື້ອນໃຫ້ແກ່ສັງຄົມ ແມ່ນຈະຖືກປັບໃໝ 500,000-5,000,000 ກີບ/ຄັ້ງ ພ້ອມທັງຮັບຜິດຊອບປົວແປງ (ປັບປຸງ) ຄືນໃຫ້ເປັນປົກກະຕິ;

11. ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ໃດໜຶ່ງ ຫາກສ້າງກິ່ນເໝັນທີ່ສົ່ງຜົນກະທົບໃຫ້ຜູ້ຢູ່ອ້ອມຂ້າງ ແມ່ນຈະຖືກປັບໃໝ 500,000-5,000,000 ກີບ;

12. ບຸກຄົນ, ນິຕິບຸກຄົນ ທີ່ປະພື້ນທີ່ດິນເປົ່າຫວ່າງໃຫ້ຮົກເຮື້ອ; ປະເຮືອນຢູ່ອາໃສ, ຕຶກອາຄານ ໃຫ້ເກົ່າແກ່ຊຸດໂຊມ ເພພັງບໍ່ສ້ອມແປງ ຫຼື ມ້າງຂອກ ຈະຖືກປັບໃໝ 500,000-2,000,000 ກີບ;

13. ການຖິ້ມສານເຄມີອຸດສະຫະກຳ ຈະຖືກປັບໃໝ 1,000,000-10,000,000 ກີບ.

### ມາດຕາ 25 ພາກສ່ວນຮັບຜິດຊອບໃນການປັບໃໝ

ອົງການຄຸ້ມຄອງການສ້າງນະຄອນຫຼວງວຽງຈັນສະອາດໃນມາດຕາ 10 ເປັນຜູ້ປັບໃໝຕໍ່ຜູ້ລະເມີດ. ເງິນທີ່ໄດ້ຈາກການປັບໃໝແບ່ງ 70% ເຂົ້າໃນວຽກງານສ້າງນະຄອນຫຼວງວຽງຈັນສະອາດ ແລະ ຍ້ອງຍໍຜູ້ທີ່ປະຕິບັດຕົວຈິງ, ການໃຊ້ຈ່າຍແມ່ນໃຫ້ສອດຄ່ອງກັບລະບຽບການເງິນ, ອີກ 30% ມອບເຂົ້າງົບປະມານແຫ່ງລັດ.

## ໝວດທີ 8
## ບົດບັນຍັດສຸດທ້າຍ

### ມາດຕາ 26 ການຈັດຕັ້ງປະຕິບັດ

1. ມອບໃຫ້ຫ້ອງການຄຸ້ມຄອງ ແລະ ບໍລິການຕົວເມືອງວຽງຈັນ ເປັນໃຈກາງນຳພາຂຳນວຍຄວບຄຸມ ແລະ ລາຍງານການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ໃຫ້ອົງການປົກຄອງນະຄອນຫຼວງວຽງຈັນ ຮັບຊາບຢ່າງເປັນປົກກະຕິ.

2. ມອບໃຫ້ອົງການຄຸ້ມຄອງການສ້າງນະຄອນຫຼວງວຽງຈັນສະອາດ ຕາມມາດຕາ 10 ຂອງຂໍ້ຕົກລົງສະບັບນີ້ເປັນຜູ້ຄຸ້ມຄອງ, ຕິດຕາມຊຸກຍູ້ ກວດກາ ແລະ ລາຍງານການຈັດຕັ້ງປະຕິບັດຕາມພາລະບົດບາດ ແລະ ຄວາມຮັບຜິດຊອບຂອງພາກສ່ວນຕົນໃຫ້ອົງການປົກຄອງ ນະຄອນຫຼວງວຽງຈັນ ຮັບຊາບຢ່າງເປັນປົກກະຕິ.

3. ບັນດາພະແນກການ, ອົງການທຽບເທົ່າຂັ້ນນະຄອນຫຼວງວຽງຈັນ, ອົງການປົກຄອງເມືອງ, ອົງການປົກຄອງບ້ານ, ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ ຈົ່ງຮັບຮູ້ ແລະ ໃຫ້ຄວາມຮ່ວມມືໃນການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ໃຫ້ໄດ້ຮັບຜົນດີ.

4. ຕໍ່ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ, ຄົນບໍ່ມີສັນຊາດ, ຊາວຕ່າງປະເທດ ແລະ ຊາວຕ່າງດ້າວ ທີ່ເຄື່ອນໄຫວ ແລະ ອາໃສຢູ່ໃນນະຄອນຫຼວງວຽງຈັນ ຈົ່ງຮັບຮູ້, ໃຫ້ຄວາມຮ່ວມມື ແລະ ຕື່ນຕົວປະກອບສ່ວນ ແລະ ມີພັນທະໜ້າທີ່ ໃນການຈັດຕັ້ງປະຕິບັດ ການສ້າງນະຄອນຫຼວງວຽງຈັນສະອາດ.

### ມາດຕາ 27 ຜົນສັກສິດ

ຂໍ້ຕົກລົງສະບັບນີ້ປ່ຽນແທນມະຕິຕົກລົງເລກທີ 3/ອປຄ.ນວ, ລົງວັນທີ 25 ກັນຍາ 2015 ແລະ ມີຜົນສັກສິດນຳໃຊ້ແຕ່ວັນລົງລາຍເຊັນ ແລະ ຈັດພິມລົງເຜີຍແຜ່ໃນຈົດໝາຍເຫດທາງລັດຖະການຂອງ ນະຄອນຫຼວງວຽງຈັນ 15 ວັນ.

**ເຈົ້າຄອງນະຄອນຫຼວງວຽງຈັນ**

ອາດສະພັງທອງ ສີພັນດອນ

ບ່ອນສົ່ງ:

| | |
|---|---|
| - ເຈົ້າຄອງ-ຮອງເຈົ້າຄອງນະຄອນຫຼວງວຽງຈັນ | 3 ສະບັບ |
| - ທຸກຫ້ອງການຂອງກະຊວງ, ອົງການອ້ອມຂ້າງສູນກາງພັກ ສະພາແຫ່ງຊາດ ແລະ ລັດຖະບານ | 1 ສະບັບ |
| - ຫ້ອງການຄະນະຂາທິການສະພາປະຊາຊົນ ນວ | 1 ສະບັບ |
| - ທຸກພະແນກການ, ອົງການທຽບເທົ່າອ້ອມຂ້າງ ນວ | 1 ສະບັບ |
| - ທຸກເມືອງ ອ້ອມຂ້າງ ນວ | 1 ສະບັບ |
| - ທຸກບ້ານໃນທົ່ວ ນວ | 1 ສະບັບ |
| - ເກັບມ້ຽນ | 1 ສະບັບ |